**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງກະສິກຳ ແລະ ສິ່ງແວດລ້ອມ

3899

ເລກທີ ..../ກສ

ນະຄອນຫຼວງວຽງຈັນ, ວັນທີ 28 AUG 2026

# ຂໍ້ຕົກລົງ

## ວ່າດ້ວຍ ທຸລະກິດກ່ຽວກັບຢາງພາລາ

- ອີງຕາມ ກົດໝາຍ ວ່າດ້ວຍປ່າໄມ້ ສະບັບເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019;
- ອີງຕາມ ດຳລັດ ວ່າດ້ວຍຢາງພາລາ ສະບັບເລກທີ 18/ລບ, ລົງວັນທີ 26 ກຸມພາ 2026;
- ອີງຕາມ ດຳລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງກະສິກຳ ແລະ ສິ່ງແວດລ້ອມ ສະບັບເລກທີ 534/ນຍ, ລົງວັນທີ 14 ສິງຫາ 2025;
- ອີງຕາມ ໜັງສືສະເໜີ ຂອງກົມປ່າໄມ້ ສະບັບເລກທີ 4462/ກປມ, ລົງວັນທີ 02 ສິງຫາ 2026;
- ອີງຕາມ ໜັງສືສະເໜີ ຂອງຫ້ອງການ ສະບັບເລກທີ 5081/ຫກ, ລົງວັນທີ 17 ສິງຫາ 2026.

**ລັດຖະມົນຕີ ກະຊວງ ກະສິກຳ ແລະ ສິ່ງແວດລ້ອມ ອອກຂໍ້ຕົກລົງ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດ ລະບຽບການ, ເງື່ອນໄຂ, ຂັ້ນຕອນ ແລະ ມາດຕະການ ກ່ຽວກັບ ການຄຸ້ມຄອງ ແລະ ຕິດຕາມກວດກາການດຳເນີນທຸລະກິດກ່ຽວກັບຢາງພາລາ ຕະຫຼອດຮອດການຄຸ້ມຄອງໂຮງງານປຸງແຕ່ງຢາງພາລາ ໃຫ້ເປັນເອກະພາບໃນຂອບເຂດທົ່ວປະເທດ ເພື່ອເຮັດໃຫ້ວຽກງານດັ່ງກ່າວ ມີປະສິດທິພາບ ແລະ ປະສິດທິຜົນ, ອຳນວຍຄວາມສະດວກ, ຊຸກຍູ້, ສົ່ງເສີມ ທຸລະກິດກ່ຽວກັບຢາງພາລາ ຕາມກົນໄກເສດຖະກິດຕະຫຼາດ ແນໃສ່ຍົກລະດັບສະມັດຖະພາບການຜະລິດປຸງແຕ່ງຢາງພາລາ ໃຫ້ໄດ້ຕາມມາດຕະຖານ, ສ້າງມູນຄ່າເພີ່ມ ແລະ ເປັນມິດກັບສິ່ງແວດລ້ອມ ພ້ອມທັງເປັນການແກ້ໄຂຊີວິດການເປັນຢູ່ຂອງປະຊາຊົນໃຫ້ດີຂຶ້ນ, ເພີ່ມຄວາມປົກຫຸ້ມຂອງປ່າໄມ້, ສາມາດເຊື່ອມໂຍງກັບ ພາກພື້ນ ແລະ ສາກົນ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ຂອງຊາດ ຕາມທິດສີຂຽວ ແລະ ຍືນຍົງ.

**ມາດຕາ 2 ທຸລະກິດກ່ຽວກັບຢາງພາລາ**

ທຸລະກິດກ່ຽວກັບຢາງພາລາ ແມ່ນ ການດຳເນີນທຸລະກິດ ກ່ຽວກັບ ການຜະລິດແນວພັນ, ການປູກ, ການຊື້ ຂາຍ, ໂຮງງານປຸງແຕ່ງຢາງພາລາ, ສົ່ງອອກ, ນຳເຂົ້າ ແລະ ສົ່ງຜ່ານ ແນວພັນ, ໄມ້ ແລະ ຜະລິດຕະພັນຢາງພາລາ ລວມທັງການຊື້ ຂາຍ ສິນເຊື່ອກາກບອນຈາກປ່າປູກຢາງພາລາ ແລະ ທຸລະກິດອື່ນ ກ່ຽວກັບຢາງພາລາ ໃຫ້ຖືກຕ້ອງ ແລະ ສອດຄ່ອງ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບ ທີ່ນຳໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ຕົ້ນຢາງ** ໝາຍເຖິງ ຕົ້ນໄມ້ຢາງພາລາ (*Hevea brasiliensis*) ທີ່ສາມາດໃຫ້ນ້ຳຢາງ;
2. **ຢາງພາລາ** ໝາຍເຖິງ ວັດຖຸດິບ ທີ່ໄດ້ຈາກຕົ້ນຢາງ ເປັນນ້ຳຢາງສົດ, ຢາງກ້ອນຖ້ວຍ ແລະ ອື່ນໆ;
3. **ລານທ້ອນໂຮມຢາງພາລາ** ໝາຍເຖິງ ສະຖານທີ່ເກັບທ້ອນໂຮມຢາງພາລາ ສຳລັບເກັບ ຊື້ ຂາຍ;
4. **ຜູ້ດຳເນີນທຸລະກິດຢາງພາລາ** ໝາຍເຖິງ ຜູ້ທີ່ດຳເນີນທຸລະກິດ ກ່ຽວກັບ ຢາງພາລາ ທຸກປະເພດ;
5. **ໃບຢັ້ງຢືນດຳເນີນກິດຈະການໂຮງງານປຸງແຕ່ງຢາງພາລາ** ໝາຍເຖິງ ເອກະສານຢັ້ງຢືນທາງດ້ານກົດໝາຍ ທີ່ອອກໃຫ້ແກ່ຜູ້ໄດ້ຮັບອະນຸຍາດດຳເນີນກິດຈະການໂຮງງານປຸງແຕ່ງຢາງພາລາ;
6. **ໂຮງງານປຸງແຕ່ງຢາງພາລາ** ໝາຍເຖິງ ສະຖານທີ່ປຸງແຕ່ງ ທີ່ນຳໃຊ້ຢາງພາລາເປັນວັດຖຸດິບ ເຂົ້າຜ່ານຂະບວນການຜະລິດປຸງແຕ່ງ ປ່ຽນຈາກ ນ້ຳຢາງສົດ, ຢາງກ້ອນຖ້ວຍ ມາເປັນ ຜະລິດຕະພັນເຄິ່ງສຳເລັດຮູບ ແລະ ຜະລິດຕະພັນສຳເລັດຮູບ ດ້ວຍການນຳໃຊ້ເຄື່ອງຈັກ ແລະ ແຮງງານຄົນ ຢູ່ພາຍໃນໂຮງງານ;
7. **ຜະລິດຕະພັນຢາງພາລາເຄິ່ງສຳເລັດຮູບ** ໝາຍເຖິງ ຜະລິດຕະພັນທີ່ໄດ້ຜ່ານຂະບວນການຜະລິດປຸງແຕ່ງ ທີ່ໄດ້ຈາກຈາກນ້ຳຢາງສົດ, ຢາງກ້ອນຖ້ວຍ ໃຫ້ກາຍເປັນ ຢາງກ້ອນອັດແໜ້ນ, ຢາງລີດເປັນແຜ່ນຮົມຄວັນ ແລະ ຜະລິດຕະພັນເຄິ່ງສຳເລັດຮູບອື່ນ;
8. **ຜະລິດຕະພັນຢາງພາລາສຳເລັດຮູບ** ໝາຍເຖິງ ຜະລິດຕະພັນທີ່ໄດ້ຜ່ານຂະບວນການຜະລິດປຸງແຕ່ງ ໃຫ້ກາຍເປັນຜະລິດຕະພັນສຳເລັດຮູບໃດໜຶ່ງ ເຊັ່ນ ເຄື່ອງຮັບໃຊ້ອຸປະໂພກ, ອຸປະກອນທາງການແພດ, ຊິ້ນສ່ວນປະກອບຍານພາຫະນະ ແລະ ຜະລິດຕະພັນສຳເລັດຮູບອື່ນ;
9. **ສິນເຂົ້າ ຢາງພາລາ** ໝາຍເຖິງ ຢາງພາລາທີ່ນຳເຂົ້າມາຜະລິດປຸງແຕ່ງ ຢູ່ພາຍໃນໂຮງງານປຸງແຕ່ງຢາງພາລາ;
10. **ສິນອອກ ຢາງພາລາ** ໝາຍເຖິງ ຢາງພາລາທີ່ນຳອອກຈາກໂຮງງານປຸງແຕ່ງຢາງພາລາ;
11. **ອັດຕາການນຳໃຊ້ຢາງພາລາ** ໝາຍເຖິງ ບໍລິມາດຢາງພາລາ ທີ່ວັດແທກໄດ້ຕົວຈິງຈາກການຜະລິດປຸງແຕ່ງ ໂດຍສົມທຽບບໍລິມາດສິນເຂົ້າຢາງພາລາ;
12. **ວິຊາການສະເພາະດ້ານ** ໝາຍເຖິງ ຜູ້ທີ່ໄດ້ຮຽນຈົບ ຫຼື ຜ່ານການຝຶກອົບຮົມວິຊາສະເພາະດ້ານໃດໜຶ່ງ ທີ່ກ່ຽວຂ້ອງກັບກິດຈະການປຸງແຕ່ງຢາງພາລາ ຫຼື ຂະແໜງວິຊາການທີ່ກ່ຽວຂ້ອງ.

**ມາດຕາ 4 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ເຄື່ອນໄຫວ ແລະ ພົວພັນກັບ ວຽກງານທຸລະກິດກ່ຽວກັບຢາງພາລາ ຢູ່ ສປປ ລາວ.

## ໝວດທີ 2
## ປະເພດທຸລະກິດກ່ຽວກັບຢາງພາລາ

**ມາດຕາ 5 ປະເພດທຸລະກິດກ່ຽວກັບຢາງພາລາ**

ປະເພດທຸລະກິດກ່ຽວກັບຢາງພາລາ ມີ ດັ່ງນີ້:

1. ການຜະລິດ ແນວພັນ ແລະ ເບ້ຍ ຢາງພາລາ;
2. ການປູກຢາງພາລາ ເພື່ອການຄ້າ;
3. ການຊື້ ຂາຍ ຢາງພາລາ;
4. ໂຮງງານປຸງແຕ່ງຢາງພາລາ;
5. ການສົ່ງອອກ ແນວພັນຢາງພາລາ, ໄມ້ຢາງພາລາ ແລະ ຜະລິດຕະພັນໄມ້ຢາງພາລາ;
6. ການນຳເຂົ້າ ແລະ ສົ່ງຜ່ານ ແນວພັນຢາງພາລາ, ໄມ້ຢາງພາລາ ແລະ ຜະລິດຕະພັນຢາງພາລາ;
7. ການຊື້ ຂາຍ ສິນເຊື່ອກາກບອນ ຈາກປ່າປູກຢາງພາລາ;
8. ທຸລະກິດອື່ນກ່ຽວກັບຢາງພາລາ.

**ມາດຕາ 6 ການຜະລິດແນວພັນ ແລະ ເບ້ຍຢາງພາລາ**

ການຜະລິດແນວພັນ ແລະ ເບ້ຍຢາງພາລາ ແມ່ນ ການຂະຫຍາຍແນວພັນຢາງພາລາ ໂດຍມີແຫຼ່ງທີ່ມາຢ່າງຖືກຕ້ອງ, ມີແນວພັນ ແລະ ເບ້ຍຢາງພາລາ ທີ່ດີ, ມີຄຸນນະພາບ, ເໝາະສົມກັບສະພາບພື້ນທີ່ ແລະ ພູມິອາກາດຂອງແຕ່ລະທ້ອງຖິ່ນ ລວມທັງການຕິດຕາມກວດກາ, ບົວລະບັດຮັກສາແນວພັນ ແລະ ເບ້ຍຢາງພາລາໃຫ້ຖືກຕ້ອງຕາມເຕັກນິກວິຊາການ.

ການຜະລິດແນວພັນ ແລະ ເບ້ຍຢາງພາລາ ຕ້ອງມີເນື້ອທີ່ດິນສວນພໍ່ແມ່ພັນ ຢ່າງໜ້ອຍ ໜຶ່ງເຮັກຕາ ແລະ ສວນກ້າເບ້ຍຢາງພາລາ ຕ້ອງມີເນື້ອທີ່ດິນສວນກ້າເບ້ຍ ຢ່າງໜ້ອຍ ໜຶ່ງພັນຫ້າຮ້ອຍຕາແມັດ ໂດຍໄດ້ຮັບອະນຸຍາດຈາກພະແນກກະສິກຳ ແລະ ສິ່ງແວດລ້ອມ ຂັ້ນແຂວງ ແລະ ອອກໃບຢັ້ງຢືນສວນກ້າເບ້ຍໄມ້ ແລະ ເພາະຊຳຢາງພາລາ ຈາກຂະແໜງປ່າໄມ້ ໂດຍນຳໃຊ້ແບບພິມ ບຢສກ 1.

**ມາດຕາ 7 ການປູກຢາງພາລາເພື່ອການຄ້າ**

ການປູກຢາງພາລາເພື່ອການຄ້າ ຕ້ອງມີເນື້ອທີ່ດິນ ຢ່າງໜ້ອຍ ຊາວເຮັກຕາ, ມີເບ້ຍ ແລະ ຊະນິດແນວພັນທີ່ເປັນຄວາມຕ້ອງການຂອງຕະຫຼາດ ເພື່ອຕອບສະໜອງດ້ານວັດຖຸດິບໃຫ້ແກ່ໂຮງງານປຸງແຕ່ງຢາງພາລາ. ສວນປູກຢາງພາລາທຸກຕອນ ຕ້ອງໄດ້ຮັບການຂຶ້ນທະບຽນປ່າປູກ ຫຼື ໃບຢັ້ງຢືນໄມ້ປູກ ນຳຂະແໜງການກະສິກຳ ແລະ ສິ່ງແວດລ້ອມ ຕາມການແບ່ງຂັ້ນຄຸ້ມຄອງ ເພື່ອຢັ້ງຢືນກຳມະສິດ ແລະ ຢັ້ງຢືນແຫຼ່ງທີ່ມາຂອງຢາງພາລາ ພ້ອມທັງເປັນການຊຸກຍູ້, ສົ່ງເສີມ ການປູກ ແລະ ການນຳໃຊ້ຢາງພາລາ ໃຫ້ຖືກຕ້ອງ ແລະ ສອດຄ່ອງ ຕາມກົດໝາຍ ແລະ ລະບຽບການ.

ການປູກຢາງພາລາຢູ່ໃນເຂດທີ່ດິນປ່າໄມ້ ຕ້ອງໄດ້ດຳເນີນການສຳຫຼວດ, ຈັດສັນ ແລະ ກຳນົດເນື້ອທີ່ປູກຢາງພາລາ ໃນເຂດທີ່ດິນປ່າຊຸດໂຊມ ແລະ ທີ່ດິນປ່າປອກໂຫຼ້ນ ຕາມທີ່ໄດ້ກຳນົດໄວ້ໃນແຜນຈັດສັນປ່າໄມ້.

ທຸລະກິດກ່ຽວກັບການປູກຢາງພາລາ ໃຫ້ປະຕິບັດ ດັ່ງນີ້:

1. ການປູກຢາງພາລາ ໃນເຂດປ່າຜະລິດ ຊຶ່ງລັດໄດ້ຮັບຮູ້ສິດນຳໃຊ້ທີ່ດິນຕອນດັ່ງກ່າວ ສາມາດຂີດຢາງພາລາ, ຕັດໄມ້, ຂາຍ ແລະ ເຄື່ອນຍ້າຍ ຢາງພາລາ ແລະ ໄມ້ຢາງພາລາໄດ້;

2. ການປູກຢາງພາລາ ໃນເຂດປ່າປ້ອງກັນ, ປ່າສະຫງວນ ຫຼື ທີ່ດິນແຄມນ້ຳ ຊຶ່ງລັດໄດ້ຮັບຮູ້ສິດນຳໃຊ້ທີ່ດິນ ສາມາດຂີດຢາງພາລາ, ຂາຍ ແລະ ເຄື່ອນຍ້າຍ ຢາງພາລາໄດ້, ແຕ່ບໍ່ອະນຸຍາດໃຫ້ຕັດໄມ້ຢາງພາລາ ເພື່ອເປົ້າໝາຍທາງດ້ານການຄ້າ;

3. ການປູກຢາງພາລາ ໃນທີ່ດິນກະສິກຳ ທີ່ນຳໃຊ້ເຂົ້າໃນເປົ້າໝາຍ ປູກຕົ້ນໄມ້ໃຫ້ໝາກ ຫຼື ພືດອາຍຸຍາວ ທີ່ໄດ້ຮັບສິດນຳໃຊ້ທີ່ດິນ ຢ່າງຖືກຕ້ອງຕາມກົດໝາຍ ສາມາດຂີດຢາງພາລາ, ຕັດໄມ້, ຂາຍ ແລະ ເຄື່ອນຍ້າຍຢາງພາລາ ແລະ ໄມ້ຢາງພາລາໄດ້.

**ມາດຕາ 8 ການຊື້ ຂາຍ ຢາງພາລາ**

ການຊື້ ຂາຍ ຢາງພາລາ ແມ່ນ ການເກັບຊື້ ແລະ ຂາຍ ນ້ຳຢາງສົດ, ຢາງກ້ອນຖ້ວຍ, ຢາງແຜ່ນດິບ, ຢາງຮົມຄວັນ ແລະ ຜະລິດຕະພັນຢາງພາລາ ລວມທັງ ໄມ້ຢາງພາລາ.

ການເກັບຊື້ຢາງພາລາ ຕ້ອງມີລານຫ້ອນໂຮມຢາງພາລາ ທີ່ຖືກຕ້ອງຕາມມາດຕະຖານເຕັກນິກ ແລະ ໄດ້ຮັບອະນຸຍາດຈາກຂະແໜງການກະສິກຳ ແລະ ສິ່ງແວດລ້ອມ.

**ມາດຕາ 9 ໂຮງງານປຸງແຕ່ງຢາງພາລາ**

ໂຮງງານປຸງແຕ່ງຢາງພາລາ ແມ່ນ ການນຳເອົານ້ຳຢາງສົດ, ຢາງກ້ອນຖ້ວຍ ມາຜ່ານຂະບວນການຜະລິດປຸງແຕ່ງຢູ່ພາຍໃນໂຮງງານ ໃຫ້ກາຍເປັນຜະລິດຕະພັນເຄິ່ງສຳເລັດຮູບ ແລະ ຜະລິດຕະພັນສຳເລັດຮູບ.

ສຳລັບ ການຄຸ້ມຄອງໂຮງງານປຸງແຕ່ງຢາງພາລາ ເປັນຕົ້ນ ປະເພດ, ຂະໜາດ, ມາດຕະຖານ, ການສ້າງຕັ້ງ, ການດຳເນີນກິດຈະການ, ການປ່ຽນແປງ, ການຄັດສົມ, ການຄຸ້ມຄອງ, ຕິດຕາມ ສິນເຂົ້າ ແລະ ສິນອອກ ຢາງພາລາ ໃຫ້ປະຕິບັດຕາມ ໝວດທີ 4 ຫາ ໝວດທີ 7 ຂອງຂໍ້ຕົກລົງສະບັບນີ້.

**ມາດຕາ 10 ການ ສົ່ງອອກ ແນວພັນຢາງພາລາ, ໄມ້ຢາງພາລາ ແລະ ຜະລິດຕະພັນໄມ້ຢາງພາລາ**

ການສົ່ງອອກ ແນວພັນຢາງພາລາ, ໄມ້ຢາງພາລາ ແລະ ຜະລິດຕະພັນໄມ້ຢາງພາລາ ຕ້ອງໄດ້ຮັບອະນຸຍາດ ຈາກ ພະແນກກະສິກຳ ແລະ ສິ່ງແວດລ້ອມ ຂັ້ນແຂວງ ແລະ ປະຕິບັດຕາມກົດໝາຍ, ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນທີ່ກ່ຽວຂ້ອງ.

ໄມ້ຢາງພາລາ ສາມາດສົ່ງອອກເປັນທ່ອນໄດ້ ແຕ່ຕ້ອງມີໃບທະບຽນປ່າປູກ ແລະ ໃບຢັ້ງຢືນໄມ້ປູກ ຢາງພາລາ.

ບໍ່ອະນຸຍາດໃຫ້ສົ່ງອອກ ນ້ຳຢາງສົດ ແລະ ຢາງກ້ອນຖ້ວຍ.

**ມາດຕາ 11 ການ ນຳເຂົ້າ ແລະ ສົ່ງຜ່ານ ແນວພັນຢາງພາລາ, ໄມ້ຢາງພາລາ ແລະ ຜະລິດຕະພັນຢາງພາລາ**

ການນຳເຂົ້າ ແນວພັນຢາງພາລາ, ໄມ້ຢາງພາລາ ແລະ ຜະລິດຕະພັນຢາງພາລາ ເພື່ອຕອບສະໜອງ ຄວາມຕ້ອງການໃນການນຳໃຊ້ພາຍໃນ ຕ້ອງມີໃບຢັ້ງຢືນແຫຼ່ງທີ່ມາຈາກປະເທດຕົ້ນທາງ ແລະ ໄດ້ຮັບອະນຸຍາດ ຈາກກົມປ່າໄມ້ ໂດຍຜ່ານການກວດກາ ຂອງເຈົ້າໜ້າທີ່ກັກກັນພືດ ແລະ ເຈົ້າໜ້າທີ່ອື່ນທີ່ກ່ຽວຂ້ອງ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

ບໍ່ອະນຸຍາດໃຫ້ນຳເຂົ້າ ນ້ຳຢາງສົດ ແລະ ຢາງກ້ອນຖ້ວຍ.

ການສົ່ງຜ່ານ ແນວພັນຢາງພາລາ, ໄມ້ຢາງພາລາ ແລະ ຜະລິດຕະພັນຢາງພາລາ ລວມທັງນ້ຳຢາງສົດ ແລະ ຢາງກ້ອນຖ້ວຍ ສາມາດສົ່ງຜ່ານໄດ້ໂດຍບໍ່ຕ້ອງຂໍອະນຸຍາດຈາກຂະແໜງການກະສິກຳ ແລະ ສິ່ງແວດລ້ອມ ແຕ່ຕ້ອງປະຕິບັດຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 12 ການຊື້ ຂາຍ ສິນເຊື່ອກາກບອນ ຈາກປ່າປູກຢາງພາລາ**

ການຊື້ ຂາຍ ສິນເຊື່ອກາກບອນ ຈາກປ່າປູກຢາງພາລາ ແມ່ນ ການຕົກລົງກັນ ລະຫວ່າງ ຜູ້ຊື້ ທີ່ເປັນນິຕິ ບຸກຄົນ ຫຼື ລັດຖະບານ ທັງພາຍໃນ ແລະ ຕ່າງປະເທດ ກັບ ຜູ້ຂາຍ ທີ່ເປັນເຈົ້າຂອງໂຄງການກາກບອນ ຈາກປ່າ ປູກຢາງພາລາ ຕ້ອງໄດ້ຄິດໄລ່ເປັນຫົວໜ່ວຍທຽບເທົ່າເປັນໂຕນກາກບອນໄດອອກໄຊ (tCO2e) ເພື່ອທົດແທນ ການປ່ອຍທາດອາຍເຮືອນແກ້ວ ທີ່ຜູ້ຊື້ໄດ້ປ່ອຍສູງເກີນອັດຕາການອະນຸຍາດປ່ອຍ ຕາມທີ່ກຳນົດໄວ້ ໃນສັນຍາ ປາຣີ ວ່າດ້ວຍການປ່ຽນແປງດິນຟ້າອາກາດ. ກາກບອນປ່າປູກໄມ້ຢາງພາລາ ທີ່ໄດ້ຂາຍໄປແລ້ວ ຈະເປັນກຳມະ ສິດຂອງຜູ້ຊື້.

ການຊື້ ຂາຍ ສິນເຊື່ອກາກບອນ ຈາກປ່າປູກຢາງພາລາ ຕ້ອງໄດ້ຂຶ້ນທະບຽນວິສາຫະກິດ, ໄດ້ຮັບອະນຸ ຍາດດຳເນີນທຸລະກິດກ່ຽວກັບສິນເຊື່ອກາກບອນ ແລະ ຂຶ້ນທະບຽນໂຄງການສິນເຊື່ອກາກບອນ ຕາມທີ່ໄດ້ກຳ ນົດໄວ້ໃນດຳລັດ ວ່າດ້ວຍ ສິນເຊື່ອກາກບອນ ທີ່ໄດ້ກຳນົດໄວ້ ເປັນແຕ່ລະໄລຍະ.

## ໝວດທີ 3
## ການດຳເນີນທຸລະກິດກ່ຽວກັບຢາງພາລາ

**ມາດຕາ 13 ການດຳເນີນທຸລະກິດກ່ຽວກັບຢາງພາລາ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຈຸດປະສົງດຳເນີນທຸລະກິດກ່ຽວກັບຢາງພາລາ ໃຫ້ແຈ້ງຂຶ້ນທະ ບຽນວິສາຫະກິດ ນຳຂະແໜງການອຸດສາຫະກຳ ແລະ ການຄ້າ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍວິສາ ຫະກິດ, ພາຍຫຼັງໄດ້ຮັບໃບທະບຽນວິສາຫະກິດແລ້ວ ຕ້ອງໄດ້ຂໍອະນຸຍາດດຳເນີນທຸລະກິດກ່ຽວກັບ ຢາງພາລາ ນຳຂະແໜງການກະສິກຳ ແລະ ສິ່ງແວດລ້ອມ ຕາມທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້.

**ມາດຕາ 14 ເງື່ອນໄຂການດຳເນີນທຸລະກິດກ່ຽວກັບຢາງພາລາ**

ເງື່ອນໄຂການດຳເນີນທຸລະກິດກ່ຽວກັບຢາງພາລາ ມີ ດັ່ງນີ້:

1. ເປັນນິຕິບຸກຄົນ;
2. ມີ ທຶນທີ່ພຽງພໍຕາມແຕ່ລະປະເພດທຸລະກິດ;

3. ມີ ບຸກຄະລາກອນທີ່ມີຄວາມຮູ້, ຄວາມສາມາດ ທີ່ກ່ຽວຂ້ອງກັບທຸລະກິດຂອງຕົນ;
4. ເງື່ອນໄຂອື່ນ ຕາມແຕ່ລະປະເພດທຸລະກິດ ທີ່ກະຊວງກະສິກຳ ແລະ ສິ່ງແວດລ້ອມ ກຳນົດໄວ້.

**ມາດຕາ 15 ເອກະສານປະກອບຂໍອະນຸຍາດດຳເນີນທຸລະກິດກ່ຽວກັບປ່າງພາລາ**

ເອກະສານປະກອບຂໍອະນຸຍາດດຳເນີນທຸລະກິດກ່ຽວກັບປ່າງພາລາ ມີ ດັ່ງນີ້:

1. ໃບຄຳຮ້ອງ ໂດຍນຳໃຊ້ແບບພິມ ບຣດທ 2;
2. ສຳເນົາ ບັດປະຈຳຕົວ, ປຶ້ມສຳມະໂນຄົວ ຫຼື ໜັງສືຜ່ານແດນ;
3. ສຳເນົາ ໃບທະບຽນວິສາຫະກິດ (ກໍລະນີເປັນນິຕິບຸກຄົນ);
4. ບົດວິພາກເສດຖະກິດ-ເຕັກນິກ;
5. ສຳເນົາ ໃບຕາດິນ ຫຼື ໃບຢັ້ງຢືນການນຳໃຊ້ທີ່ດິນ ຫຼື ໃບຢັ້ງຢືນການສຳຫຼວດວັດແທກ;
6. ສຳເນົາ ສັນຍາເຊົ່າ ຫຼື ສຳປະທານທີ່ດິນ (ໃນກໍລະນີມີການເຊົ່າ ຫຼື ສຳປະທານທີ່ດິນ);
7. ສຳເນົາ ໃບຢັ້ງຢືນ ກ່ຽວກັບ ສິ່ງແວດລ້ອມ (ຖ້າມີ);
8. ເອກະສານອື່ນທີ່ກ່ຽວຂ້ອງ.

**ມາດຕາ 16 ຂັ້ນຕອນການຂໍອະນຸຍາດດຳເນີນທຸລະກິດກ່ຽວກັບປ່າງພາລາ**

ການຂໍອະນຸຍາດດຳເນີນທຸລະກິດກ່ຽວກັບປ່າງພາລາ ມີ ຂັ້ນຕອນ ດັ່ງນີ້:

1. ການຮັບຄຳຮ້ອງ ແລະ ການກວດກາເອກະສານ ການຂໍອະນຸຍາດດຳເນີນທຸລະກິດກ່ຽວກັບປ່າງພາລາ;
2. ການກວດກາສະຖານທີ່ຕັ້ງຂອງທຸລະກິດກ່ຽວກັບປ່າງພາລາ;
3. ການພິຈາລະນາອອກໃບອະນຸຍາດດຳເນີນທຸລະກິດກ່ຽວກັບປ່າງພາລາ.

**ມາດຕາ 17 ການຮັບຄຳຮ້ອງ ແລະ ການກວດກາເອກະສານການຂໍອະນຸຍາດດຳເນີນທຸລະກິດກ່ຽວກັບປ່າງພາລາ**

ພາຍຫຼັງໄດ້ຮັບເອກະສານທີ່ປະກອບ ເພື່ອຂໍອະນຸຍາດດຳເນີນທຸລະກິດກ່ຽວກັບປ່າງພາລາແລ້ວ, ຜູ້ທີ່ໄດ້ຮັບຊຸດເອກະສານ ຕ້ອງກວດກາຄວາມຖືກຕ້ອງຂອງເອກະສານ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 15 ຂອງຂໍ້ຕົກລົງສະບັບນີ້. ໃນກໍລະນີເຫັນວ່າ ເອກະສານບໍ່ຖືກຕ້ອງ ຫຼື ບໍ່ຄົບຖ້ວນ ໃຫ້ແຈ້ງຜູ້ຮ້ອງຂໍເປັນລາຍລັກອັກສອນ ພ້ອມທັງເຫດຜົນ ພາຍໃນກຳນົດເວລາ ຫ້າ ວັນລັດຖະການ ນັບແຕ່ວັນໄດ້ຮັບຄຳຮ້ອງເປັນຕົ້ນໄປ.

**ມາດຕາ 18 ການກວດກາສະຖານທີ່ຕັ້ງຂອງທຸລະກິດກ່ຽວກັບປ່າງພາລາ**

ການກວດກາສະຖານທີ່ຕັ້ງຂອງທຸລະກິດກ່ຽວກັບປ່າງພາລາ ຕ້ອງປະຕິບັດ ດັ່ງນີ້:

1. ກົມປ່າໄມ້ ຫຼື ພະແນກກະສິກຳ ແລະ ສິ່ງແວດລ້ອມ ຂັ້ນແຂວງ ປະສານສົມທົບກັບ ຫ້ອງການກະສິກຳ ແລະ ສິ່ງແວດລ້ອມ ຂັ້ນເມືອງ, ຄະນະກຳມະການປົກຄອງບ້ານ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ດຳເນີນການກວດກາ ຕາມແຕ່ລະກໍລະນີ;
2. ການລົງກວດກາແຕ່ລະຄັ້ງ ຕ້ອງສ້າງບົດບັນທຶກ ໂດຍກຳນົດແຈ້ງສະຖານທີ່ຕັ້ງຂອງທຸລະກິດ ແລະ ສະພາບແວດລ້ອມອ້ອມຂ້າງ ຕາມມາດຕະຖານເຕັກນິກວິຊາການ ທີ່ໄດ້ກຳນົດໄວ້ໃນແຕ່ລະໄລຍະ.

**ມາດຕາ 19 ການພິຈາລະນາອອກໃບອະນຸຍາດດຳເນີນທຸລະກິດກ່ຽວກັບປ່າງພາລາ**

ພາຍຫຼັງ ທີ່ໄດ້ຮັບໜັງສືສະເໜີພ້ອມດ້ວຍເອກະສານປະກອບຂໍອະນຸຍາດດຳເນີນທຸລະກິດກ່ຽວກັບປ່າງພາລາ ຢ່າງຖືກຕ້ອງ ແລະ ຄົບຖ້ວນແລ້ວ, ຂະແໜງການກະສິກຳ ແລະ ສິ່ງແວດລ້ອມ ຕ້ອງພິຈາລະນາອອກໃບອະນຸຍາດດຳເນີນທຸລະກິດກ່ຽວກັບປ່າງພາລາ ພາຍໃນກຳນົດເວລາ ສິບວັນ ນັບແຕ່ວັນໄດ້ຮັບເອກະສານຢ່າງຖືກຕ້ອງ ແລະ ຄົບຖ້ວນ ເປັນຕົ້ນໄປ.

ໃນກໍລະນີ ບໍ່ສາມາດອອກໃບອະນຸຍາດດຳເນີນທຸລະກິດກ່ຽວກັບປ່າງພາລາໄດ້ ຕ້ອງແຈ້ງເຫດຜົນເປັນລາຍລັກອັກສອນ ໃຫ້ຜູ້ຮ້ອງຂໍຮັບຊາບ ພາຍໃນກຳນົດເວລາ ສິບວັນ.

ການອອກໃບອະນຸຍາດດຳເນີນທຸລະກິດກ່ຽວກັບຢາງພາລາ ໃຫ້ປະຕິບັດ ດັ່ງນີ້:

1. ຫົວໜ້າຫ້ອງການກະຊວງກະສິກຳ ແລະ ສິ່ງແວດລ້ອມ ເປັນຜູ້ອອກໃບອະນຸຍາດດຳເນີນທຸລະກິດກ່ຽວກັບຢາງພາລາ ໃຫ້ແກ່ນິຕິບຸກຄົນ ທີ່ໄດ້ຂຶ້ນທະບຽນວິສາຫະກິດ ນຳກະຊວງອຸດສາຫະກຳ ແລະ ການຄ້າ ຕາມການຕົກລົງເຫັນດີຂອງລັດຖະມົນຕີກະຊວງກະສິກຳ ແລະ ສິ່ງແວດລ້ອມ ບົນພື້ນຖານການຄົ້ນຄວ້າ ແລະ ນຳສະເໜີ ຂອງກົມປ່າໄມ້;

2. ຫົວໜ້າພະແນກກະສິກຳ ແລະ ສິ່ງແວດລ້ອມ ຂັ້ນແຂວງ ເປັນຜູ້ອອກໃບອະນຸຍາດດຳເນີນທຸລະກິດກ່ຽວກັບ ຢາງພາລາ ໃຫ້ແກ່ນິຕິບຸກຄົນ ທີ່ໄດ້ຂຶ້ນທະບຽນວິສາຫະກິດ ນຳພະແນກອຸດສາຫະກຳ ແລະ ການຄ້າ ຂັ້ນແຂວງ ຕາມການສະເໜີ ຂອງຂະແໜງປ່າໄມ້.

**ມາດຕາ 20 ໃບອະນຸຍາດດຳເນີນທຸລະກິດກ່ຽວກັບຢາງພາລາ**

ໃບອະນຸຍາດດຳເນີນທຸລະກິດກ່ຽວກັບຢາງພາລາ ມີອາຍຸນຳໃຊ້ ສອງປີ ແລະ ສາມາດຕໍ່ໄດ້. ການຕໍ່ອາຍຸໃບອະນຸຍາດດຳເນີນທຸລະກິດກ່ຽວກັບຢາງພາລາ ຕ້ອງດຳເນີນກ່ອນຈະໝົດອາຍຸ ຫົກສິບວັນ ແລະ ໃບອະນຸຍາດດຳເນີນທຸລະກິດກ່ຽວກັບຢາງພາລາ ຕ້ອງເກັບມ້ຽນໄວ້ບ່ອນທີ່ເປີດເຜີຍ ສາມາດເບິ່ງເຫັນໄດ້ງ່າຍ ຢູ່ພາຍໃນບໍລິສັດ ຫຼື ໂຮງງານຂອງຕົນ.

**ມາດຕາ 21 ການໂຈະການດຳເນີນທຸລະກິດກ່ຽວກັບຢາງພາລາ**

ການດຳເນີນທຸລະກິດກ່ຽວກັບຢາງພາລາ ຈະຖືກໂຈະການເຄື່ອນໄຫວ ໃນກໍລະນີໃດໜຶ່ງ ດັ່ງນີ້:

1. ຕາມການສະເໜີຂອງຜູ້ດຳເນີນທຸລະກິດ;
2. ດຳເນີນທຸລະກິດ ບໍ່ໄປຕາມຈຸດປະສົງ ແລະ ເປົ້າໝາຍ ທີ່ໄດ້ຮັບອະນຸຍາດ;
3. ດຳເນີນທຸລະກິດ ບໍ່ຖືກຕ້ອງ ສອດຄ່ອງກັບກົດໝາຍທີ່ກ່ຽວຂ້ອງ;
4. ໂຈະການນຳໃຊ້ໃບຢັ້ງຢືນກ່ຽວກັບສິ່ງແວດລ້ອມ ຖ້າມີ.

ໃນກໍລະນີຜູ້ດຳເນີນທຸລະກິດ ບໍ່ປັບປຸງ ຫຼື ແກ້ໄຂ ຕາມການແຈ້ງເຕືອນ ໃຫ້ຂະແໜງການກະສິກຳ ແລະ ສິ່ງແວດລ້ອມ ສັ່ງໂຈະການດຳເນີນທຸລະກິດ.

**ມາດຕາ 22 ການຖອນໃບອະນຸຍາດດຳເນີນທຸລະກິດກ່ຽວກັບຢາງພາລາ**

ໃບອະນຸຍາດດຳເນີນທຸລະກິດກ່ຽວກັບຢາງພາລາ ຈະຖືກຖອນໃນກໍລະນີ ຜູ້ດຳເນີນທຸລະກິດ ບໍ່ປະຕິບັດຕາມ ຄຳສັ່ງໂຈະ. ພາຍຫຼັງ ໄດ້ຖອນໃບອະນຸຍາດດຳເນີນທຸລະກິດແລ້ວ ຂະແໜງການກະສິກຳ ແລະ ສິ່ງແວດລ້ອມ ຕ້ອງແຈ້ງໃຫ້ຂະແໜງການອຸດສາຫະກຳ ແລະ ການຄ້າ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ ພາຍໃນເວລາ ຫ້າວັນລັດຖະການ ນັບແຕ່ວັນຖອນໃບອະນຸຍາດດຳເນີນທຸລະກິດ ເປັນຕົ້ນໄປ.

## ໝວດທີ 4
## ການຄຸ້ມຄອງໂຮງງານປຸງແຕ່ງຢາງພາລາ

**ມາດຕາ 23 ປະເພດໂຮງງານປຸງແຕ່ງຢາງພາລາ**

ໂຮງງານປຸງແຕ່ງຢາງພາລາ ໄດ້ແບ່ງອອກເປັນ ສອງ ປະເພດ ດັ່ງນີ້:

1. ໂຮງງານປຸງແຕ່ງຢາງພາລາ ເຄິ່ງສຳເລັດຮູບ;
2. ໂຮງງານປຸງແຕ່ງຢາງພາລາ ສຳເລັດຮູບ.

**ມາດຕາ 24 ໂຮງງານປຸງແຕ່ງຢາງພາລາ ເຄິ່ງສຳເລັດຮູບ**

ໂຮງງານປຸງແຕ່ງຢາງພາລາ ເຄິ່ງສຳເລັດຮູບ ແມ່ນ ໂຮງງານທີ່ນຳເອົາ ນ້ຳຢາງສົດ ແລະ ຢາງກ້ອນຖ້ວຍເຂົ້າຜ່ານຂະບວນການຜະລິດປຸງແຕ່ງ ໃຫ້ກາຍເປັນຜະລິດຕະພັນຢາງພາລາເຄິ່ງສຳເລັດຮູບ ເພື່ອຕອບສະໜອງໃຫ້ແກ່ໂຮງງານປຸງແຕ່ງຢາງພາລາ ສຳເລັດຮູບ.

**ມາດຕາ 25 ໂຮງງານປຸງແຕ່ງຢາງພາລາ ສຳເລັດຮູບ**

ໂຮງງານປຸງແຕ່ງຢາງພາລາ ສຳເລັດຮູບ ແມ່ນ ໂຮງງານທີ່ນຳເອົາຜະລິດຕະພັນຢາງພາລາ ເຄິ່ງສຳເລັດຮູບ ເຂົ້າຜ່ານຂະບວນການປຸງແຕ່ງ ໃຫ້ກາຍເປັນຜະລິດຕະພັນຢາງພາລາ ສຳເລັດຮູບ.

**ມາດຕາ 26 ຂະໜາດໂຮງງານປຸງແຕ່ງຢາງພາລາ**

ຂະໜາດໂຮງງານປຸງແຕ່ງຢາງພາລາ ແມ່ນ ອີງໃສ່ກຳລັງແຮງມ້າລວມຂອງເຄື່ອງຈັກ ຫຼື ຈຳນວນແຮງງານລວມ ຫຼື ມູນຄ່າການລົງທຶນທັງໝົດ ຊຶ່ງແບ່ງອອກເປັນ ສາມ ຂະໜາດ ດັ່ງນີ້:

1. ໂຮງງານຂະໜາດນ້ອຍ ປະກອບດ້ວຍ ກຳລັງແຮງມ້າລວມຂອງເຄື່ອງຈັກ ແຕ່ 50 ແຮງມ້າລົງມາ ຫຼື ຈຳນວນແຮງງານ ແຕ່ 50 ຄົນ ລົງມາ ຫຼື ມູນຄ່າການລົງທຶນທັງໝົດ ໜຶ່ງຕື້ ກີບ ລົງມາ;

2. ໂຮງງານຂະໜາດກາງ ປະກອບດ້ວຍ ກຳລັງແຮງມ້າລວມຂອງເຄື່ອງຈັກ ແຕ່ 51 ແຮງມ້າ ຫາ 200 ແຮງມ້າ ຫຼື ຈຳນວນແຮງງານ ແຕ່ 51 ຫາ 200 ຄົນ ຫຼື ມູນຄ່າການລົງທຶນທັງໝົດ ຫຼາຍກວ່າ ໜຶ່ງຕື້ ຫາ ສີ່ຕື້ ກີບ;

3. ໂຮງງານຂະໜາດໃຫຍ່ ປະກອບດ້ວຍ ກຳລັງແຮງມ້າລວມຂອງເຄື່ອງຈັກ ແຕ່ 201 ແຮງມ້າຂຶ້ນໄປ ຫຼື ຈຳນວນແຮງງານ ແຕ່ 201 ຄົນ ຂຶ້ນໄປ ຫຼື ມູນຄ່າການລົງທຶນທັງໝົດ ຫຼາຍກວ່າ ສີ່ຕື້ ກີບ ຂຶ້ນໄປ.

**ມາດຕາ 27 ມາດຕະຖານໂຮງງານປຸງແຕ່ງຢາງພາລາ**

ມາດຕະຖານໂຮງງານປຸງແຕ່ງຢາງພາລາ ປະກອບມີ ດັ່ງນີ້:

1. ສະຖານທີ່ຕັ້ງ;
2. ສິ່ງປຸກສ້າງ ແລະ ອາຄານຜະລິດ;
3. ເຄື່ອງຈັກ ແລະ ການຕິດຕັ້ງ;
4. ຂະບວນການຜະລິດ;
5. ການນຳໃຊ້ວັດຖຸດິບ;
6. ຜະລິດຕະພັນ;
7. ການບໍລິຫານ;
8. ວິຊາການ ແລະ ກຳມະກອນ;
9. ຄວາມປອດໄພ;
10. ສຸຂານາໄມ;
11. ສິ່ງແວດລ້ອມ.

**ມາດຕາ 28 ມາດຕະຖານສະຖານທີ່ຕັ້ງ**

ມາດຕະຖານສະຖານທີ່ຕັ້ງ ມີ ດັ່ງນີ້:

1. ຕັ້ງຢູ່ເຂດເສດຖະກິດພິເສດ, ເຂດນິຄົມອຸດສາຫະກຳ, ເຂດທີ່ດິນທີ່ເປັນກຳມະສິດຂອງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ;

2. ຕັ້ງຢູ່ຫ່າງໄກຈາກ ຊຸມຊົນ, ໂຮງຮຽນ, ໂຮງໝໍ, ວັດ, ແຫຼ່ງວັດທະນະທຳ, ເຂດປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ປ່າສະຫງວນ, ປ່າປ້ອງກັນ, ເຂດປົກປັກຮັກສາແຫຼ່ງນ້ຳ, ເຂດອະນຸລັກຊີວະນາໆພັນ ແລະ ເຂດຫວງຫ້າມອື່ນ ທີ່ລັດບໍ່ອະນຸຍາດໃຫ້ດຳເນີນກິດຈະການ;

3. ມີ ເສັ້ນທາງເຂົ້າ-ອອກ ສະດວກ ແລະ ມີເນື້ອທີ່ ເໝາະສົມກັບການດຳເນີນກິດຈະການໂຮງງານ.

**ມາດຕາ 29 ມາດຕະຖານສິ່ງປຸກສ້າງ ແລະ ອາຄານການຜະລິດ**

ມາດຕະຖານສິ່ງປຸກສ້າງ ແລະ ອາຄານຜະລິດ ມີ ດັ່ງນີ້:

1. ມີ ສິ່ງປຸກສ້າງສຳລັບການຄຸ້ມຄອງບໍລິຫານ, ອາຄານຫ້ອງອາຫານ, ບ່ອນພັກຜ່ອນ, ຈອດລົດ, ຫ້ອງນ້ຳ, ບ່ອນສູບຢາ, ມີລະບົບບຳບັດນ້ຳເປື້ອນ ແລະ ກຳຈັດສິ່ງເສດເຫຼືອອື່ນ ແລະ ສິ່ງປຸກສ້າງອື່ນ;

2. ມີ ອາຄານຜະລິດ ເຊັ່ນ ອາຄານສຳລັບການຜະລິດ, ສາງ ຫຼື ບ່ອນເກັບມ້ຽນວັດຖຸດິບ, ເກັບມ້ຽນຜະລິດຕະພັນ ແລະ ອາຄານອື່ນ ທີ່ນຳໃຊ້ເຂົ້າໃນວຽກງານການປຸງແຕ່ງຢາງພາລາ;

3. ໂຄງສ້າງອາຄານ ແລະ ສິ່ງປຸກສ້າງ ຕ້ອງແໜ້ນໜາ ແລະ ເໝາະສົມກັບການດຳເນີນກິດຈະການ, ແຜນຜັງການກໍ່ສ້າງອາຄານ ຕ້ອງໄດ້ຮັບການຢັ້ງຢືນດ້ານເຕັກນິກການກໍ່ສ້າງ ຈາກຂະແໜງການທີ່ກ່ຽວຂ້ອງ;

4. ຕິດຕັ້ງລະບົບໄຟຟ້າ ແລະ ລະບົບລະບາຍອາກາດ ທີ່ຮັບປະກັນຄວາມປອດໄພ;

5. ຕິດປ້າຍຊື່ໂຮງງານ, ປ້າຍເຕືອນ, ບັງຄັບ, ເກືອດຫ້າມ ແລະ ປ້າຍຊີ້ບອກສະຖານທີ່ເຮັດວຽກຕ່າງໆ.

**ມາດຕາ 30 ມາດຕະຖານເຄື່ອງຈັກ ແລະ ການຕິດຕັ້ງ**

ມາດຕະຖານເຄື່ອງຈັກ ແລະ ການຕິດຕັ້ງ ມີ ດັ່ງນີ້:

1. ເປັນເຄື່ອງຈັກໃໝ່ ຫຼື ຖ້າເປັນເຄື່ອງຈັກໃຊ້ແລ້ວ ຕ້ອງມີຄຸນນະພາບດີ, ເໝາະສົມຕາມຍຸກສະໄໝ, ຖືກຕ້ອງກັບເປົ້າໝາຍການນຳໃຊ້, ບໍ່ມີຄວາມສ່ຽງ ຕໍ່ການເກີດຜົນກະທົບຕໍ່ສຸຂະພາບຂອງຜູ້ອອກແຮງງານ ແລະ ສິ່ງແວດລ້ອມ. ໃນນັ້ນ, ເຄື່ອງຈັກທີ່ຕິດຕັ້ງ ຕ້ອງເປັນເຄື່ອງຈັກທີ່ມີປະສິດທິພາບສູງ, ປະຢັດພະລັງງານ ແລະ ຫຼຸດຜ່ອນການປ່ອຍມົນລະພິດ;

2. ຕິດຕັ້ງເຄື່ອງຈັກ ໃຫ້ຖືກຕ້ອງຕາມລະບົບມາດຕະຖານເຕັກນິກ ແລະ ຖືກຕາມແຜນຜັງການຕິດຕັ້ງເຄື່ອງຈັກ ແລະ ຮັບປະກັນຄວາມປອດໄພໃນເວລານຳໃຊ້;

3. ຂຶ້ນບັນຊີເຄື່ອງຈັກໃຫ້ຄົບຖ້ວນ ແລະ ຖືກຕ້ອງ ເປັນຕົ້ນ ເຄື່ອງຈັກ ລ້າງຢາງ, ລີດຢາງ, ຕັດຢາງ, ເຄື່ອງຈັກໂຮຍຢາງ, ຈັກບົດຢາງ, ຈັກໜີບ, ລົດພົກລົບ, ເຕົາອົບຢາງ ແລະ ເຄື່ອງຈັກອື່ນ;

4. ມີແຜນການ ຕິດຕາມ, ກວດກາ, ບຳລຸງຮັກສາ ແລະ ສ້ອມແປງເຄື່ອງຈັກ ຢ່າງເປັນປົກກະຕິ.

**ມາດຕາ 31 ມາດຕະຖານຂະບວນການຜະລິດ**

ມາດຕະຖານຂະບວນການຜະລິດ ມີ ດັ່ງນີ້:

1. ຂະບວນການຜະລິດ ຕ້ອງເປັນລະບົບຕ່ອງໂສ້ການຜະລິດທີ່ເໝາະສົມ ເລີ່ມແຕ່ຂອດການນຳວັດຖຸດິບເຂົ້າຜະລິດປຸງແຕ່ງ ຈົນຮອດຂອດຜະລິດຕະພັນສຸດທ້າຍ ໂດຍມີລະບົບບຳບັດ ແລະ ກຳຈັດສິ່ງເສດເຫຼືອ;

2. ມີ ລະບົບບັນທຶກ ສິນເຂົ້າ ແລະ ສິນອອກ ຢາງພາລາ ຕາມຕົວຈິງ ໂດຍນຳໃຊ້ແບບພິມ ສຂສອ 3;

3. ທຸກຂອດສາຍງານການຜະລິດ ຕ້ອງມີປ້າຍຊີ້ບອກ, ບໍ່ໃຫ້ມີສິ່ງກີດຂວາງທາງຍ່າງ ແລະ ມີຄວາມເປັນລະບຽບຮຽບຮ້ອຍດີ.

**ມາດຕາ 32 ມາດຕະຖານການນຳໃຊ້ວັດຖຸດິບ**

ມາດຕະຖານການນຳໃຊ້ວັດຖຸດິບ ມີ ດັ່ງນີ້:

1. ມີແຫຼ່ງທີ່ມາຂອງຢາງພາລາ ຢ່າງຖືກຕ້ອງ ແລະ ໄດ້ຜ່ານການຢັ້ງຢືນຈາກຂະແໜງປ່າໄມ້ ໂດຍນຳໃຊ້ແບບພິມ ບຢຫຼມ 4;

2. ຢາງພາລາທີ່ນຳເຂົ້າໂຮງງານ ຕ້ອງມີແຫຼ່ງທີ່ມາຢ່າງຈະແຈ້ງ ເຊັ່ນ ຈາກສວນປູກຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຫຼື ຜະລິດຕະພັນຢາງພາລາເຄິ່ງສຳເລັດຮູບ ທີ່ນຳເຂົ້າຈາກຕ່າງປະເທດ.

**ມາດຕາ 33 ມາດຕະຖານຜະລິດຕະພັນ**

ມາດຕະຖານຜະລິດຕະພັນ ມີ ດັ່ງນີ້:

1. ຕ້ອງປຸງແຕ່ງຢາງພາລາ ໃຫ້ເປັນຜະລິດຕະພັນໃດໜຶ່ງ ດ້ວຍການສ້າງມູນຄ່າເພີ່ມ ເຮັດໃຫ້ຜະລິດຕະພັນຢາງພາລາ ມີຄຸນນະພາບດີ ແລະ ມີມາດຕະຖານສູງ ເພື່ອຈຳໜ່າຍ ພາຍໃນ ແລະ ສົ່ງອອກຕ່າງປະເທດ;

2. ມີເຄື່ອງໝາຍການຄ້າ ຫຼື ໄດ້ຮັບການຈົດທະບຽນ ຕາມກົດໝາຍ ແລະ ລະບຽບການ;

3. ຜະລິດຕະພັນຢາງພາລາ ເພື່ອສົ່ງອອກ ຕ້ອງປະຕິບັດຕາມມາດຕະຖານ ໃນພາກພື້ນ ແລະ ສາກົນ ພ້ອມທັງປະຕິບັດໃຫ້ຖືກຕ້ອງຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 34 ມາດຕະຖານການບໍລິຫານ**

ມາດຕະຖານການບໍລິຫານ ມີ ດັ່ງນີ້:

1. ມີ ໂຄງຮ່າງການຈັດຕັ້ງ ຢ່າງເປັນລະບົບຄົບຊຸດ;

2. ມີ ແຜນການບໍລິຫານ ແລະ ຄຸ້ມຄອງການຜະລິດ ປະຈຳປີ ໂດຍຜ່ານການຢັ້ງຢືນຈາກຂະແໜງການກະສິກຳ ແລະ ສິ່ງແວດລ້ອມ ຕາມການແບ່ງຂັ້ນຄຸ້ມຄອງ;

3. ປະຕິບັດຕາມມາດຕະຖານພາຍໃນ ຫຼື ສາກົນໃດໜຶ່ງ ໂດຍຜ່ານການຢັ້ງຢືນຈາກອົງການທີ່ກ່ຽວຂ້ອງ.

**ມາດຕາ 35 ມາດຕະຖານວິຊາການ ແລະ ກຳມະກອນ**

ມາດຕະຖານວິຊາການ ແລະ ກຳມະກອນ ມີ ດັ່ງນີ້:

1. ຜູ້ທີ່ເປັນຫົວໜ້າ ຫຼື ຮອງຫົວໜ້າ ແຕ່ລະສາຍງານການຜະລິດ ແລະ ຄຸ້ມຄອງບໍລິຫານ ຕ້ອງມີໃບປະກາສະນີຍະບັດ ຫຼື ໃບຢັ້ງຢືນດ້ານເຕັກນິກວິຊາການ ແລະ ມີປະສົບການທີ່ແນ່ນອນ ຢ່າງໜ້ອຍໜຶ່ງຄົນ;

2. ກຳມະກອນ ຕ້ອງຜ່ານການຝຶກອົບຮົມດ້ານເຕັກນິກວິຊາການ ຕາມໜ້າວຽກຕົວຈິງ;

3. ມີສຸຂະພາບແຂງແຮງດີ ແລະ ໄດ້ຮັບການກວດສຸຂະພາບເປັນປົກກະຕິ ຢ່າງໜ້ອຍ ໜຶ່ງຄັ້ງຕໍ່ປີ.

**ມາດຕາ 36 ມາດຕະຖານຄວາມປອດໄພ**

ມາດຕະຖານຄວາມປອດໄພ ມີ ດັ່ງນີ້:

1. ມີໜ່ວຍງານຮັບຜິດຊອບດ້ານຄວາມປອດໄພ ເປັນຜູ້ຕາງໜ້າ ຜູ້ໃຊ້ແຮງງານ, ຜູ້ອອກແຮງງານ ແລະ ພະນັກງານຮັບຜິດຊອບດ້ານຄວາມປອດໄພ ພາຍໃນໂຮງງານ;

2. ຜູ້ຮັບຜິດຊອບຄວາມປອດໄພ, ວິຊາການ ແລະ ກຳມະກອນ ຕ້ອງໄດ້ຜ່ານການຝຶກອົບຮົມວຽກງານຄວາມປອດໄພ ຢ່າງໜ້ອຍ ໜຶ່ງຄັ້ງຕໍ່ປີ;

3. ວິຊາການ ແລະ ກຳມະກອນ ຕ້ອງໃສ່ເຄື່ອງມືປ້ອງກັນແຮງງານ ໂດຍຂຶ້ນກັບຄວາມຈຳເປັນ ຂອງແຕ່ລະໜ້າວຽກ ທີ່ມີຄວາມສ່ຽງ ແລະ ເປັນອັນຕະລາຍ ເປັນຕົ້ນ ຊຸດເຄື່ອງນຸ່ງ, ອຸປະກອນປິດ ປາກ, ດັງ, ຫູ, ຊິບມື ແລະ ອື່ນໆ;

4. ເຄື່ອງຈັກທີ່ມີຄວາມສ່ຽງຕໍ່ການເກີດອຸປະຕິເຫດ ຕ້ອງຕິດຕັ້ງຝາຄອບ ຫຼື ຕາໜ່າງເຫຼັກໃສ່, ມີການຕິດຕັ້ງລະບົບອຸປະກອນຕັດໄຟຟ້າແບບອັດຕະໂນມັດ ແລະ ມີລະບົບປ້ອງກັນອັກຄີໄພ ເປັນຕົ້ນ ລະບົບສັນຍານເຕືອນໄພ, ບັ້ງດັບໄຟ ຫຼື ລະບົບນ້ຳມອດໄຟ ທີ່ສາມາດນຳໃຊ້ໄດ້;

5. ສະຖານທີ່ ທີ່ເປັນອັນຕະລາຍ ຫຼື ບ່ອນທີ່ມີຄວາມສ່ຽງອາດຈະເກີດອຸບປະຕິເຫດ ຕ້ອງຕິດຕັ້ງປ້າຍເຕືອນ, ປ້າຍຫ້າມ, ປ້າຍຊີ້ບອກ ແລະ ແຕ້ມເສັ້ນຂອບເຂດຕ່າງໆ.

**ມາດຕາ 37 ມາດຕະຖານສຸຂານາໄມ**

ມາດຕະຖານສຸຂານາໄມ ມີ ດັ່ງນີ້:

1. ມີ ຜູ້ຮັບຜິດຊອບວຽກງານສຸຂານາໄມ ຢ່າງໜ້ອຍ ໜຶ່ງຄົນ;

2. ມີ ຕູ້ຢາ ແລະ ອຸປະກອນ ປະຖົມພະຍາບານເບື້ອງຕົ້ນ;

3. ມີ ນ້ຳດື່ມ ທີ່ສະອາດ ແລະ ລະບົບນ້ຳໃຊ້ ຢ່າງພຽງພໍ ເປັນຕົ້ນ ລະບົບນ້ຳປະປາ ຫຼື ນ້ຳບາດານ;

4. ມີ ຫ້ອງນ້ຳສະອາດ ທີ່ເໝາະສົມ;

5. ປະຕິບັດມາດຕະການປ້ອງກັນການແຜ່ລະບາດຂອງເຊື້ອພະຍາດ ຢ່າງເຂັ້ມງວດ.

**ມາດຕາ 38 ມາດຕະຖານສິ່ງແວດລ້ອມ**

ມາດຕະຖານສິ່ງແວດລ້ອມ ມີ ດັ່ງນີ້:

1. ຕ້ອງເຮັດການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ, ແຜນຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມຂອງໂຮງງານ ແລະ ມີໃບຢັ້ງຢືນກ່ຽວກັບສິ່ງແວດລ້ອມ;

2. ມີ ມາດຕະການປ້ອງກັນ ແລະ ຄວບຄຸມມົນລະພິດ ທາງດິນ, ນ້ຳ, ອາກາດ ແລະ ສິ່ງລົບກວນ ບໍ່ໃຫ້ເກີນຄ່າມາດຕະຖານສິ່ງແວດລ້ອມແຫ່ງຊາດ;

3. ມີ ລະບົບບຳບັດ ຫຼື ກຳຈັດສິ່ງເສດເຫຼືອ ພາຍໃນໂຮງງານ ທີ່ເປັນລະບົບມາດຕະຖານ;

4. ມົນລະພິດ ແລະ ສິ່ງເສດເຫຼືອ ຕ້ອງໄດ້ຮັບການບຳບັດ ໃຫ້ຢູ່ໃນເກນຄ່າມາດຕະຖານສິ່ງແວດລ້ອມແຫ່ງຊາດ ຈຶ່ງສາມາດປ່ອຍອອກຈາກໂຮງງານໄດ້.

# ໝວດທີ 5
# ການສ້າງຕັ້ງ ແລະ ການຂໍອະນຸຍາດດຳເນີນກິດຈະການໂຮງງານປຸງແຕ່ງຢາງພາລາ

**ມາດຕາ 39 ການສະເໜີສ້າງຕັ້ງໂຮງງານປຸງແຕ່ງຢາງພາລາ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຈຸດປະສົງ ສ້າງຕັ້ງໂຮງງານປຸງແຕ່ງຢາງພາລາ ຕ້ອງນຳສະເໜີຂໍອະນຸຍາດສ້າງຕັ້ງໂຮງງານ ຈາກຂະແໜງການກະສິກຳ ແລະ ສິ່ງແວດລ້ອມ ຕາມການແບ່ງຂັ້ນຄຸ້ມຄອງ.

**ມາດຕາ 40 ເງື່ອນໄຂການສ້າງຕັ້ງໂຮງງານປຸງແຕ່ງຢາງພາລາ**

ເງື່ອນໄຂການສ້າງຕັ້ງໂຮງງານປຸງແຕ່ງຢາງພາລາ ຕ້ອງມີ ດັ່ງນີ້:

1. ເປັນບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ຖືກຕ້ອງຕາມກົດໝາຍ;
2. ມີ ທຶນຮອນ, ວັດຖຸປະກອນ ແລະ ພາຫະນະຮັບໃຊ້ ຢ່າງພຽງພໍ;
3. ມີ ວິຊາການ ແລະ ກຳມະກອນ ທີ່ມີຄຸນວຸດທິການສຶກສາທີ່ກ່ຽວຂ້ອງ;
4. ມີ ພື້ນທີ່ດິນສ້າງຕັ້ງໂຮງງານປຸງແຕ່ງຢາງພາລາ ທີ່ເໝາະສົມ;
5. ມີ ເນື້ອທີ່ດິນປູກຢາງພາລາ ເພື່ອຕອບສະໜອງນ້ຳຢາງ ໃຫ້ແກ່ໂຮງງານປຸງແຕ່ງຢາງພາລາ ຢ່າງພຽງພໍ;
6. ມີ ບົດວິພາກເສດຖະກິດ-ເຕັກນິກ ກ່ຽວກັບ ການສ້າງຕັ້ງໂຮງງານປຸງແຕ່ງຢາງພາລາ;
7. ມີ ເງື່ອນໄຂອື່ນ ທີ່ກ່ຽວຂ້ອງກັບການຂໍອະນຸຍາດສ້າງຕັ້ງໂຮງງານປຸງແຕ່ງຢາງພາລາ.

**ມາດຕາ 41 ບົດວິພາກເສດຖະກິດ-ເຕັກນິກ ໂຮງງານປຸງແຕ່ງຢາງພາລາ**

ການສ້າງບົດວິພາກເສດຖະກິດ-ເຕັກນິກໂຮງງານປຸງແຕ່ງຢາງພາລາ ຕ້ອງໄດ້ຮັບອະນຸຍາດ ຈາກຂະແໜງການກະສິກຳ ແລະ ສິ່ງແວດລ້ອມ ຕາມການແບ່ງຂັ້ນຄຸ້ມຄອງ ທີ່ກຳນົດໄວ້ໃນມາດຕາ 46 ຂອງຂໍ້ຕົກລົງສະບັບນີ້.

ບົດວິພາກເສດຖະກິດ-ເຕັກນິກໂຮງງານປຸງແຕ່ງຢາງພາລາ ມີເນື້ອໃນຕົ້ນຕໍ ດັ່ງນີ້:

**1. ສະພາບລວມໂຄງການ**

1) ທີ່ຕັ້ງຂອງໂຄງການ;
2) ເຫດຜົນການສະເໜີໂຄງການ;
3) ຈຸດປະສົງ ແລະ ເປົ້າໝາຍຂອງໂຄງການ.

**2. ເຕັກນິກການກໍ່ສ້າງໂຮງງານປຸງແຕ່ງຢາງພາລາ**

1) ສະຖານທີ່ສ້າງຕັ້ງ;
2) ແຜນການປຸກສ້າງອາຄານໂຮງງານ ແລະ ອາຄານອື່ນ;
3) ແຜນການນຳໃຊ້ເຄື່ອງຈັກ ແລະ ອຸປະກອນຮັບໃຊ້ການຜະລິດ;
4) ແຜນການນຳໃຊ້ວັດຖຸດິບ;
5) ແຜນວາດຂະບວນການຜະລິດ ແລະ ບົດອະທິບາຍ;
6) ການຄຸ້ມຄອງດ້ານສິ່ງແວດລ້ອມ;
7) ຄວາມປອດໄພ ແລະ ສຸຂານາໄມ ໃນໂຮງງານ;
8) ສະຫວັດດີການສັງຄົມຂອງໂຮງງານ;
9) ສຳເນົາ ແຜນຜັງການກໍ່ສ້າງ ແລະ ລະບົບເຕັກນິກເຄື່ອງຈັກໂຮງງານ ຕາມລະບຽບການປຸກສ້າງ;
10) ແຜນງົບປະມານ ເພື່ອອຳນວຍຄວາມສະດວກໃນການຊຸກຍູ້, ຕິດຕາມ ກວດກາ ຂອງພາກລັດ.

**3. ພາກເສດຖະກິດ**

1) ຕົ້ນທຶນການຜະລິດ;
2) ຄາດຄະເນລາຍຮັບ, ລາຍຈ່າຍ ແລະ ຜົນກຳໄລ;
3) ແຜນການຜະລິດ ແລະ ການຈຳໜ່າຍ;
4) ແຜນການນຳໃຊ້ແຮງງານ.

4. **ຄາດຄະເນຜົນໄດ້ຮັບຈາກໂຄງການ**

1) ປະສິດທິຜົນການລົງທຶນ (ເສດຖະກິດ, ສັງຄົມ, ສິ່ງແວດລ້ອມ ແລະ ຊີວະນາໆພັນ);

2) ການວິເຄາະຄວາມສ່ຽງ ໃນການດຳເນີນກິດຈະການໂຮງງານປຸງແຕ່ງຢາງພາລາ.

**ມາດຕາ 42 ເອກະສານປະກອບການຂໍອະນຸຍາດສ້າງຕັ້ງໂຮງງານປຸງແຕ່ງຢາງພາລາ**

ເອກະສານປະກອບການຂໍອະນຸຍາດສ້າງຕັ້ງໂຮງງານປຸງແຕ່ງຢາງພາລາ ມີ ດັ່ງນີ້:

1. ໃບຄຳຮ້ອງຂໍອະນຸຍາດສ້າງຕັ້ງໂຮງງານ ໂດຍນຳໃຊ້ແບບພິມ ບຣຣງ 5;
2. ສຳເນົາ ໃບທະບຽນວິສາຫະກິດ;
3. ສຳເນົາ ໃບຕາດິນ ຫຼື ໃບຢັ້ງຢືນນຳໃຊ້ທີ່ດິນ, ສັນຍາເຊົ່າ ຫຼື ສຳປະທານທີ່ດິນ/ສິ່ງປຸກສ້າງ (ຖ້າມີ);
4. ສຳເນົາ ໃບອະນຸຍາດລົງທຶນ ໃນກໍລະນີເປັນກິດຈະການສຳປະທານ;
5. ສຳເນົາ ໃບຢັ້ງຢືນການມອບອາກອນ;
6. ສຳເນົາ ໃບຢັ້ງຢືນການເຄື່ອນໄຫວທາງດ້ານການເງິນ;
7. ສຳເນົາ ໃບຢັ້ງຢືນຮັບຮອງເອົາບົດວິພາກເສດຖະກິດ-ເຕັກນິກ;
8. ສຳເນົາ ໃບອະນຸຍາດປຸກສ້າງ;
9. ສຳເນົາ ໃບຢັ້ງຢືນກ່ຽວກັບສິ່ງແວດລ້ອມ.

**ມາດຕາ 43 ຂັ້ນຕອນການຂໍອະນຸຍາດສ້າງຕັ້ງໂຮງງານປຸງແຕ່ງຢາງພາລາ**

ຂັ້ນຕອນການຂໍອະນຸຍາດສ້າງຕັ້ງໂຮງງານປຸງແຕ່ງຢາງພາລາ ຕ້ອງປະຕິບັດ ດັ່ງນີ້:

1. ການຮັບຄຳຮ້ອງ ແລະ ກວດກາເອກະສານປະກອບຂໍອະນຸຍາດສ້າງຕັ້ງໂຮງງານປຸງແຕ່ງຢາງພາລາ;
2. ການກວດກາສະຖານທີ່ຕັ້ງໂຮງງານປຸງແຕ່ງຢາງພາລາ;
3. ການພິຈາລະນາສ້າງຕັ້ງໂຮງງານປຸງແຕ່ງຢາງພາລາ.

**ມາດຕາ 44 ການຮັບຄຳຮ້ອງ ແລະ ກວດກາເອກະສານປະກອບຂໍອະນຸຍາດສ້າງຕັ້ງໂຮງງານປຸງແຕ່ງຢາງພາລາ**

ພາຍຫຼັງ ໄດ້ຮັບເອກະສານປະກອບການຂໍອະນຸຍາດສ້າງຕັ້ງໂຮງງານປຸງແຕ່ງຢາງພາລາແລ້ວ, ຜູ້ໄດ້ຮັບຊຸດເອກະສານ ຕ້ອງກວດກາຄວາມຖືກຕ້ອງຂອງເອກະສານ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 42 ຂອງຂໍ້ຕົກລົງສະບັບນີ້. ໃນກໍລະນີເຫັນວ່າ ເອກະສານບໍ່ຖືກຕ້ອງ ຫຼື ບໍ່ຄົບຖ້ວນ ໃຫ້ແຈ້ງຜູ້ຮ້ອງຂໍເປັນລາຍລັກອັກສອນ ພ້ອມທັງເຫດຜົນພາຍໃນກຳນົດເວລາ ຫ້າ ວັນລັດຖະການ ນັບແຕ່ວັນໄດ້ຮັບຄຳຮ້ອງເປັນຕົ້ນໄປ.

**ມາດຕາ 45 ການກວດກາສະຖານທີ່ຕັ້ງໂຮງງານປຸງແຕ່ງຢາງພາລາ**

ການກວດກາສະຖານທີ່ຕັ້ງໂຮງງານປຸງແຕ່ງຢາງພາລາ ໄດ້ແບ່ງຂັ້ນຄຸ້ມຄອງ ດັ່ງນີ້:

1. ໂຮງງານຂະໜາດໃຫຍ່ ມອບໃຫ້ກົມປ່າໄມ້ ປະສານສົມທົບກັບ ພະແນກກະສິກຳ ແລະ ສິ່ງແວດລ້ອມ ຂັ້ນແຂວງ, ຫ້ອງການກະສິກຳ ແລະ ສິ່ງແວດລ້ອມ ຂັ້ນເມືອງ, ຫ້ອງການໂຍທາທິການ ແລະ ຂົນສົ່ງ ຂັ້ນເມືອງ, ຄະນະກຳມະການປົກຄອງຕາແສງ, ບ້ານ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ດຳເນີນການກວດກາຕາມແຕ່ລະກໍລະນີ;

2. ໂຮງງານຂະໜາດນ້ອຍ ແລະ ຂະໜາດກາງ ມອບໃຫ້ພະແນກກະສິກຳ ແລະ ສິ່ງແວດລ້ອມ ຂັ້ນແຂວງ ປະສານສົມທົບກັບ ຫ້ອງການກະສິກຳ ແລະ ສິ່ງແວດລ້ອມ ຂັ້ນເມືອງ, ຫ້ອງການໂຍທາທິການ ແລະ ຂົນສົ່ງ ຂັ້ນເມືອງ, ຄະນະກຳມະການປົກຄອງຕາແສງ, ບ້ານ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ດຳເນີນການກວດກາຕາມແຕ່ລະກໍລະນີ.

ການລົງກວດກາແຕ່ລະຄັ້ງ ຕ້ອງສ້າງບົດບັນທຶກ ໂດຍກຳນົດແຈ້ງສະຖານທີ່ຕັ້ງໂຮງງານ, ສະພາບແວດລ້ອມອ້ອມຂ້າງໂຮງງານ ຕາມມາດຕະຖານໂຮງງານປຸງແຕ່ງຢາງພາລາ ທີ່ກຳນົດໄວ້ໃນມາດຕາ 27 ຂອງຂໍ້ຕົກລົງສະບັບນີ້.

**ມາດຕາ 46 ການພິຈາລະນາສ້າງຕັ້ງໂຮງງານປຸງແຕ່ງຢາງພາລາ**

ພາຍຫຼັງ ສຳເລັດການກວດກາສະຖານທີ່ຕັ້ງໂຮງງານ ແລະ ມີບົດບັນທຶກການກວດກາ ທີ່ເຫັນດີໃຫ້ດຳເນີນການສ້າງຕັ້ງໂຮງງານ, ຂະແໜງການກະສິກຳ ແລະ ສິ່ງແວດລ້ອມ ຕ້ອງພິຈາລະນາອອກຂໍ້ຕົກລົງ ວ່າດ້ວຍການອະນຸຍາດສ້າງຕັ້ງໂຮງງານປຸງແຕ່ງຢາງພາລາ ພາຍໃນ ສິບ ວັນລັດຖະການ ນັບແຕ່ວັນເຊັນບົດບັນທຶກການກວດກາໂຮງງານ ຕາມການແບ່ງຂັ້ນຄຸ້ມຄອງ ດັ່ງນີ້:

1. ລັດຖະມົນຕີ ກະຊວງກະສິກຳ ແລະ ສິ່ງແວດລ້ອມ ເປັນຜູ້ອອກຂໍ້ຕົກລົງ ວ່າດ້ວຍການອະນຸຍາດສ້າງຕັ້ງໂຮງງານປຸງແຕ່ງຢາງພາລາ ຂະໜາດໃຫຍ່ ຕາມການສະເໜີຂອງຫ້ອງການກະຊວງ ບົນພື້ນຖານການຄົ້ນຄວ້າຂອງກົມປ່າໄມ້ ໂດຍນຳໃຊ້ແບບພິມ ຂຕຮງ 6;

2. ຫົວໜ້າ ພະແນກກະສິກຳ ແລະ ສິ່ງແວດລ້ອມ ຂັ້ນແຂວງ ເປັນຜູ້ອອກຂໍ້ຕົກລົງ ວ່າດ້ວຍການອະນຸຍາດສ້າງຕັ້ງໂຮງງານປຸງແຕ່ງຢາງພາລາ ຂະໜາດນ້ອຍ ແລະ ຂະໜາດກາງ ບົນພື້ນຖານການສະເໜີຂອງຂະແໜງປ່າໄມ້ ໂດຍນຳໃຊ້ແບບພິມ ຂຕຮງ 7.

**ມາດຕາ 47 ການອະນຸຍາດດຳເນີນກິດຈະການໂຮງງານປຸງແຕ່ງຢາງພາລາ**

ພາຍຫຼັງ ອອກຂໍ້ຕົກລົງ ວ່າດ້ວຍການອະນຸຍາດສ້າງຕັ້ງໂຮງງານປຸງແຕ່ງຢາງພາລາແລ້ວ ຫ້ອງການກະຊວງ ຫຼື ຂະແໜງທີ່ກ່ຽວຂ້ອງ ຂອງພະແນກກະສິກຳ ແລະ ສິ່ງແວດລ້ອມ ຂັ້ນແຂວງ ຕ້ອງສຳເນົາເອກະສານ ສົ່ງໃຫ້ກົມປ່າໄມ້ ຫຼື ຂະແໜງປ່າໄມ້, ພະແນກກະສິກຳ ແລະ ສິ່ງແວດລ້ອມ ຂັ້ນແຂວງ ເພື່ອແຈ້ງໃຫ້ຜູ້ໄດ້ຮັບອະນຸຍາດດຳເນີນການຜະລິດທົດລອງ ພາຍໃນກຳນົດ ເກົ້າສິບວັນ ນັບແຕ່ວັນໄດ້ຮັບຂໍ້ຕົກລົງເປັນຕົ້ນໄປ. ໃນໄລຍະການຜະລິດທົດລອງ ແມ່ນ ບໍ່ອະນຸຍາດໃຫ້ຈຳໜ່າຍ ຫຼື ຂາຍຜະລິດຕະພັນ ຢ່າງເດັດຂາດ.

ກົມປ່າໄມ້ ຫຼື ຂະແໜງປ່າໄມ້, ພະແນກກະສິກຳ ແລະ ສິ່ງແວດລ້ອມ ຂັ້ນແຂວງ ຕ້ອງດຳເນີນການລົງຊຸກຍູ້, ຕິດຕາມ, ກວດກາ ແລະ ປະເມີນຜົນການຜະລິດທົດລອງພາຍໃນກຳນົດເວລາ ເກົ້າສິບວັນ ນັບແຕ່ວັນໄດ້ຮັບຂໍ້ຕົກລົງເປັນຕົ້ນໄປ ຈາກນັ້ນໃຫ້ສະເໜີອອກໃບຢັ້ງຢືນດຳເນີນກິດຈະການໂຮງງານປຸງແຕ່ງຢາງພາລາ ໂດຍນຳໃຊ້ແບບພິມ ບຣດກ 8, ບຢດກ 9, ບຢດກ 10 ຕາມການແບ່ງຂັ້ນຄຸ້ມຄອງ.

**ມາດຕາ 48 ໃບຢັ້ງຢືນດຳເນີນກິດຈະການໂຮງງານປຸງແຕ່ງຢາງພາລາ**

ໃບຢັ້ງຢືນດຳເນີນກິດຈະການໂຮງງານປຸງແຕ່ງຢາງພາລາ ແມ່ນ ເອກະສານອະນຸຍາດໃຫ້ດຳເນີນກິດຈະການໂຮງງານປຸງແຕ່ງຢາງພາລາ ພາຍຫຼັງທີ່ໄດ້ສຳເລັດການກໍ່ສ້າງ, ຕິດຕັ້ງເຄື່ອງຈັກ ແລະ ຜ່ານການຜະລິດທົດລອງແລ້ວ.

ໃບຢັ້ງຢືນດຳເນີນກິດຈະການໂຮງງານປຸງແຕ່ງຢາງພາລາ ມີອາຍຸ ສາມ ປີ ແລະ ສາມາດຕໍ່ໄດ້ ໂດຍໃຫ້ຕິດໄວ້ບ່ອນທີ່ເປີດເຜີຍ ແລະ ເຫັນໄດ້ງ່າຍ ຢູ່ພາຍໃນໂຮງງານ ຫຼື ບໍລິສັດຂອງຕົນ.

**ມາດຕາ 49 ການຕໍ່ອາຍຸໃບຢັ້ງຢືນດຳເນີນກິດຈະການໂຮງງານປຸງແຕ່ງຢາງພາລາ**

ໃບຢັ້ງຢືນດຳເນີນກິດຈະການໂຮງງານປຸງແຕ່ງຢາງພາລາ ກ່ອນຈະໝົດກຳນົດເວລາ ສາມສິບ ວັນ ຜູ້ດຳເນີນກິດຈະການ ຕ້ອງສະເໜີຕໍ່ຂະແໜງການກະສິກຳ ແລະ ສິ່ງແວດລ້ອມ ເພື່ອພິຈາລະນາຕໍ່ອາຍຸໃບຢັ້ງຢືນດຳເນີນກິດຈະການໂຮງງານປຸງແຕ່ງຢາງພາລາ. ຖ້າໝົດກຳນົດ ສາມປີແລ້ວ ຫາກຜູ້ດຳເນີນກິດຈະການໂຮງງານ ບໍ່ສະເໜີຕໍ່ອາຍຸຂອງໃບຢັ້ງຢືນ ກໍຈະຖືກໂຈະ ຫຼື ຖອນ ໃບຢັ້ງຢືນດຳເນີນກິດຈະການດັ່ງກ່າວ.

ເອກະສານປະກອບການຂໍຕໍ່ອາຍຸໃບຢັ້ງຢືນດຳເນີນກິດຈະການໂຮງງານປຸງແຕ່ງຢາງພາລາ ມີ ດັ່ງນີ້:

1. ໃບຄຳຮ້ອງ ຂໍຕໍ່ອາຍຸໃບຢັ້ງຢືນດຳເນີນກິດຈະການໂຮງງານປຸງແຕ່ງຢາງພາລາ;
2. ບົດລາຍງານການດຳເນີນກິດຈະການໂຮງງານປຸງແຕ່ງຢາງພາລາ ໂດຍນຳໃຊ້ແບບພິມ ບງດກ 11;
3. ສຳເນົາໃບຢັ້ງຢືນດຳເນີນກິດຈະການໂຮງງານປຸງແຕ່ງຢາງພາລາ ທີ່ຈະໝົດອາຍຸ;
4. ປະກອບເອກະສານຕາມມາດຕາ 42 ຂອງຂໍ້ຕົກລົງສະບັບນີ້.

ພາຍຫຼັງ ໄດ້ຮັບຊຸດເອກະສານຂໍຕໍ່ອາຍຸແລ້ວ ຂະແໜງການກະສິກຳ ແລະ ສິ່ງແວດລ້ອມ ຕາມການແບ່ງຂັ້ນຄຸ້ມຄອງ ຕ້ອງລົງກວດກາເບິ່ງພື້ນທີ່ຂອງໂຮງງານຕົວຈິງ ພ້ອມທັງສ້າງບົດບັນທຶກການລົງກວດກາ ພາຍຫຼັງໄດ້

ປະຕິບັດຄົບຖ້ວນຕາມຂັ້ນຕອນແລ້ວ ຕ້ອງຕໍ່ໃບຢັ້ງຢືນດຳເນີນກິດຈະການໂຮງງານປຸງແຕ່ງຢາງພາລາ ໂດຍນຳໃຊ້ແບບພິມ ບຕດກ 12 ແລະ ແບບພິມ ບຕດກ 13 ຕາມການແບ່ງຂັ້ນຄຸ້ມຄອງ.

**ມາດຕາ 50 ການໂຈະການດຳເນີນກິດຈະການໂຮງງານປຸງແຕ່ງຢາງພາລາ**

ການດຳເນີນກິດຈະການໂຮງງານປຸງແຕ່ງຢາງພາລາ ຈະຖືກໂຈະ ໃນກໍລະນີໃດໜຶ່ງ ດັ່ງນີ້:

1. ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບການສ້າງຕັ້ງໂຮງງານປຸງແຕ່ງຢາງພາລາ;
2. ບໍ່ປະຕິບັດຕາມເງື່ອນໄຂຂອງການສ້າງຕັ້ງໂຮງງານປຸງແຕ່ງຢາງພາລາ;
3. ບໍ່ປະຕິບັດພັນທະທາງດ້ານການເງິນ ແລະ ພັນທະອື່ນ ຕາມກົດໝາຍ ແລະ ລະບຽບການ;
4. ປົດບັງ, ເຊື່ອງອຳ ແລະ ໃຫ້ຂໍ້ມູນ ກ່ຽວກັບການສ້າງຕັ້ງໂຮງງານປຸງແຕ່ງຢາງພາລາ ທີ່ບໍ່ຖືກຕ້ອງ ແລະ ບໍ່ສອດຄ່ອງກັບຄວາມເປັນຈິງ;
5. ບໍ່ປະຕິບັດການແກ້ໄຂບັນຫາ ທີ່ຕິດພັນກັບການຈັດຕັ້ງປະຕິບັດວຽກງານຂອງໂຮງງານປຸງແຕ່ງຢາງພາລາ ພາຍຫຼັງ ມີການແຈ້ງເຕືອນ ຈາກຂະແໜງການກະສິກຳ ແລະ ສິ່ງແວດລ້ອມ.

ການໂຈະ ການດຳເນີນກິດຈະການໂຮງງານປຸງແຕ່ງຢາງພາລາ ຕ້ອງມີກຳນົດເວລາທີ່ແນ່ນອນ ເພື່ອໃຫ້ເຈົ້າຂອງໂຮງງານ ສາມາດປັບປຸງ ແລະ ແກ້ໄຂ ໃຫ້ທັນການ.

ພາຍຫຼັງ ຂະແໜງການກະສິກຳ ແລະ ສິ່ງແວດລ້ອມ ໄດ້ໂຈະການດຳເນີນກິດຈະການໂຮງງານປຸງແຕ່ງຢາງພາລາແລ້ວ ຕ້ອງແຈ້ງໃຫ້ຂະແໜງການອຸດສາຫະກຳ ແລະ ການຄ້າ ແລະ ຂະແໜງການທີ່ກ່ຽວຂ້ອງເພື່ອຊາບ.

**ມາດຕາ 51 ການຖອນໃບຢັ້ງຢືນດຳເນີນກິດຈະການໂຮງງານປຸງແຕ່ງຢາງພາລາ**

ໃບຢັ້ງຢືນການດຳເນີນກິດຈະການໂຮງງານປຸງແຕ່ງຢາງພາລາ ຈະຖືກຖອນໃນກໍລະນີໃດໜຶ່ງ ດັ່ງນີ້:

1. ບໍ່ ປັບປຸງ ແລະ ແກ້ໄຂ ຕາມການແຈ້ງໂຈະ ທີ່ໄດ້ກຳນົດໄວ້ໃນມາດຕາ 50 ຂອງຂໍ້ຕົກລົງສະບັບນີ້;
2. ບໍ່ດຳເນີນກິດຈະການພາຍໃນກຳນົດ ສາມປີ ໂດຍມີການແຈ້ງໂຈະເປັນລາຍລັກອັກສອນຈາກຂະແໜງການກະສິກຳ ແລະ ສິ່ງແວດລ້ອມ;
3. ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບການສ້າງໂຮງງານປຸງແຕ່ງຢາງພາລາ;
4. ຕາມການສະເໜີຂອງຜູ້ດຳເນີນກິດຈະການໂຮງງານປຸງແຕ່ງຢາງພາລາ;
5. ຕາມການຕັດສິນຂອງສານ.

ພາຍຫຼັງ ຂະແໜງການກະສິກຳ ແລະ ສິ່ງແວດລ້ອມ ໄດ້ຖອນໃບຢັ້ງຢືນດຳເນີນກິດຈະການໂຮງງານປຸງແຕ່ງຢາງພາລາແລ້ວ, ຈາກນັ້ນ ຈຶ່ງນຳສະເໜີຜູ້ອອກຂໍ້ຕົກລົງ ວ່າດ້ວຍການອະນຸຍາດສ້າງຕັ້ງໂຮງງານປຸງແຕ່ງຢາງພາລາ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 46 ຂອງຂໍ້ຕົກລົງສະບັບນີ້ ພິຈາລະນາຍົກເລີກ ຕາມການແບ່ງຂັ້ນຄຸ້ມຄອງ ດັ່ງນີ້:

1. ລັດຖະມົນຕີ ກະຊວງກະສິກຳ ແລະ ສິ່ງແວດລ້ອມ ເປັນຜູ້ອອກຂໍ້ຕົກລົງ ຍົກເລີກ ໃບຢັ້ງຢືນດຳເນີນກິດຈະ ການໂຮງງານປຸງແຕ່ງຢາງພາລາ ຂະໜາດໃຫຍ່ ຕາມການສະເໜີຂອງຫ້ອງການກະຊວງ ບົນພື້ນຖານການຄົ້ນຄວ້າ ຂອງກົມປ່າໄມ້ ໂດຍນຳໃຊ້ແບບພິມ ຂຍຮງ 17;
2. ຫົວໜ້າ ພະແນກກະສິກຳ ແລະ ສິ່ງແວດລ້ອມ ຂັ້ນແຂວງ ເປັນຜູ້ອອກຂໍ້ຕົກລົງ ຍົກເລີກ ໃບຢັ້ງຢືນດຳເນີນກິດຈະການໂຮງງານປຸງແຕ່ງຢາງພາລາ ຂະໜາດນ້ອຍ ແລະ ຂະໜາດກາງ ບົນພື້ນຖານການສະເໜີ ຂອງຂະແໜງປ່າໄມ້ ໂດຍນຳໃຊ້ແບບພິມ ຂຍຮງ 18.

ພາຍຫຼັງຍົກເລີກໃບຢັ້ງຢືນດຳເນີນກິດຈະການໂຮງງານປຸງແຕ່ງຢາງພາລາແລ້ວ ຕ້ອງແຈ້ງໃຫ້ຂະແໜງການອຸດສາຫະກຳ ແລະ ການຄ້າ ພິຈາລະນາ ຍົກເລີກໃບທະບຽນວິສາຫະກິດ ຕາມກົດໝາຍ.

**ມາດຕາ 52 ການຂໍໃບຢັ້ງຢືນດຳເນີນກິດຈະການໂຮງງານປຸງແຕ່ງຢາງພາລາຄືນໃໝ່**

ໃນກໍລະນີ ໃບຢັ້ງຢືນດຳເນີນກິດຈະການໂຮງງານປຸງແຕ່ງຢາງພາລາ ເສຍຫາຍ ຫຼື ຖືກທຳລາຍ ຜູ້ດຳເນີນກິດຈະການ ຕ້ອງຍື່ນໃບຄຳຮ້ອງ ຫາຂະແໜງການກະສິກຳ ແລະ ສິ່ງແວດລ້ອມ ຕາມການແບ່ງຂັ້ນຄຸ້ມຄອງ ເພື່ອພິຈາລະນາ ອອກໃບຢັ້ງຢືນດຳເນີນກິດຈະການໂຮງງານປຸງແຕ່ງຢາງພາລາ ຄືນໃໝ່.

**ມາດຕາ 53 ຄ່າທຳນຽມ ແລະ ຄ່າບໍລິການ ອອກໃບຢັ້ງຢືນດຳເນີນກິດຈະການໂຮງງານປຸງແຕ່ງຢາງພາລາ**

ຄ່າທຳນຽມ ແລະ ຄ່າບໍລິການ ອອກໃບຢັ້ງຢືນດຳເນີນກິດຈະການໂຮງງານປຸງແຕ່ງຢາງພາລາ, ການຕໍ່ອາຍຸດຳເນີນກິດຈະການ, ຂະຫຍາຍ ແລະ ອອກໃບຢັ້ງຢືນດຳເນີນກິດຈະການໂຮງງານປຸງແຕ່ງຢາງພາລາຄືນໃໝ່ ໃຫ້ປະຕິບັດຕາມລັດຖະບັນຍັດຂອງປະທານປະເທດ ວ່າດ້ວຍຄ່າທຳນຽມ ແລະ ຄ່າບໍລິການ ທີ່ປະກາດໃຊ້ ໃນແຕ່ລະໄລຍະ.

## ໝວດທີ 6
## ການປ່ຽນແປງກິດຈະການ ແລະ ການດັດສົມ ໂຮງງານປຸງແຕ່ງຢາງພາລາ

**ມາດຕາ 54 ການປ່ຽນແປງກິດຈະການໂຮງງານປຸງແຕ່ງຢາງພາລາ**

ການປ່ຽນແປງກິດຈະການໂຮງງານປຸງແຕ່ງຢາງພາລາ ແມ່ນ ການຂະຫຍາຍໂຮງງານປຸງແຕ່ງຢາງພາລາ; ການຍົກຍ້າຍໂຮງງານປຸງແຕ່ງຢາງພາລາ; ການຍົກຍ້າຍເຄື່ອງຈັກໂຮງງານປຸງແຕ່ງຢາງພາລາ; ການໂອນ; ການໃຫ້ເຊົ່າ ຫຼື ຂາຍ ກິດຈະການໂຮງງານປຸງແຕ່ງຢາງພາລາ; ການສືບທອດການດຳເນີນກິດຈະການໂຮງງານປຸງແຕ່ງຢາງພາລາ; ການປ່ຽນຊື່ໂຮງງານ ຫຼື ປ່ຽນຜູ້ດຳເນີນກິດຈະການໂຮງງານປຸງແຕ່ງຢາງພາລາ.

ການປ່ຽນແປງກິດຈະການໂຮງງານປຸງແຕ່ງຢາງພາລາ ໃຫ້ປະຕິບັດຄືກັບການປ່ຽນແປງກິດຈະການໂຮງງານອຸດສາຫະກຳປຸງແຕ່ງໄມ້ ຕາມທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງ ວ່າດ້ວຍການຄຸ້ມຄອງໂຮງງານອຸດສາຫະກຳປຸງແຕ່ງໄມ້ ເປັນແຕ່ລະໄລຍະ.

**ມາດຕາ 55 ການດັດສົມໂຮງງານປຸງແຕ່ງຢາງພາລາ**

ການດັດສົມໂຮງງານປຸງແຕ່ງຢາງພາລາ ແມ່ນ ການຄັດເລືອກ ແລະ ປັບປຸງໂຮງງານປຸງແຕ່ງຢາງພາລາ ທີ່ມີຄຸນນະພາບ, ເໝາະສົມກັບຄວາມອາດສາມາດໃນການສະໜອງແຫຼ່ງວັດຖຸດິບນ້ຳຢາງພາລາ ເພື່ອເພີ່ມປະສິດທິພາບການຜະລິດ, ປະຢັດວັດຖຸດິບ, ສ້າງມູນຄ່າເພີ່ມ, ຍົກລະດັບສີມືແຮງງານ, ພັດທະນາຜະລິດຕະພັນໃຫ້ມີຄຸນນະພາບ, ເປັນມິດກັບສິ່ງແວດລ້ອມ, ສາມາດເຄື່ອນໄຫວຢ່າງຖືກຕ້ອງຕາມກົດໝາຍ ແລະ ລະບຽບການ.

ກົມປ່າໄມ້ ຫຼື ພະແນກກະສິກຳ ແລະ ສິ່ງແວດລ້ອມ ຂັ້ນແຂວງ ສົມທົບກັບຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ດຳເນີນການດັດສົມໂຮງງານປຸງແຕ່ງຢາງພາລາ ຕາມມາດຕະຖານ ທີ່ໄດ້ກຳນົດໄວ້ໃນມາດຕາ 27 ຂອງຂໍ້ຕົກລົງສະບັບນີ້. ການດັດສົມໂຮງງານປຸງແຕ່ງຢາງພາລາ ໃຫ້ປະຕິບັດຄືກັບການດັດສົມໂຮງງານອຸດສາຫະກຳປຸງແຕ່ງໄມ້ ຕາມທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງ ວ່າດ້ວຍການຄຸ້ມຄອງໂຮງງານອຸດສາຫະກຳປຸງແຕ່ງໄມ້ ເປັນແຕ່ລະໄລຍະ ໂດຍນຳໃຊ້ແບບພິມ ຂດຮງ 14, ຂດຮງ 15, ບກຮງ 16, ຂຍຮງ 17, ຂຍຮງ 18 ແລະ ແບບພິມ ໝງຄກ 19.

## ໝວດທີ 7
## ການຄຸ້ມຄອງ ສົ້ນເຂົ້າ ແລະ ສົ້ນອອກ ຢາງພາລາ

**ມາດຕາ 56 ການຄຸ້ມຄອງ ສົ້ນເຂົ້າ ແລະ ສົ້ນອອກ ຢາງພາລາ**

ການຄຸ້ມຄອງ ສົ້ນເຂົ້າ ແລະ ສົ້ນອອກ ຢາງພາລາ ແມ່ນ ການບັນທຶກຢາງພາລາ ທີ່ນຳໃຊ້ເຂົ້າຜ່ານຂະບວນການຜະລິດປຸງແຕ່ງ ຢູ່ພາຍໃນໂຮງງານ ພ້ອມທັງຄິດໄລ່ອັດຕາການນຳໃຊ້ຢາງພາລາ ແລະ ການສູນເສຍຢາງພາລາຈາກການຜະລິດປຸງແຕ່ງ ລວມທັງຕິດຕາມ ກວດກາ, ລາຍງານ ແລະ ການເກັບຮັກສາເອກະສານຢ່າງເປັນລະບົບເລີ່ມແຕ່ຂັ້ນຕອນການນຳເຂົ້າຢາງພາລາ ຈົນເຖິງ ຂັ້ນຕອນການສົ່ງອອກຢາງພາລາ ຈາກໂຮງງານ.

ການຄຸ້ມຄອງ ສົ້ນເຂົ້າ ແລະ ສົ້ນອອກ ຢາງພາລາ ຂອງໂຮງງານ ປະກອບດ້ວຍ:

1. ລະບົບການຄຸ້ມຄອງ ສົ້ນເຂົ້າ ແລະ ສົ້ນອອກ ຢາງພາລາ;
2. ການຕິດຕາມ ສົ້ນເຂົ້າ ແລະ ສົ້ນອອກ ຢາງພາລາ;
3. ການລາຍງານ ສົ້ນເຂົ້າ ແລະ ສົ້ນອອກ ຢາງພາລາ;
4. ການເກັບຮັກສາເອກະສານຕ່າງໆ.

**ມາດຕາ 57 ລະບົບການຄຸ້ມຄອງ ສິນເຂົ້າ ແລະ ສິນອອກ ຢາງພາລາ**

ລະບົບການຄຸ້ມຄອງ ສິນເຂົ້າ ແລະ ສິນອອກ ຢາງພາລາ ຕ້ອງປະຕິບັດ ດັ່ງນີ້:

1. ການບັນທຶກຢາງພາລາ ທີ່ນຳເຂົ້າມາໃນໂຮງງານ ເຊັ່ນ ນ້ຳຢາງສົດ, ຢາງກ້ອນຖ້ວຍ ແລະ ຢາງອື່ນໆ;
2. ການບັນທຶກຢາງພາລາ ທີ່ນຳອອກຈາກໂຮງງານປຸງແຕ່ງຢາງພາລາ ເຊັ່ນ ຜະລິດຕະພັນເຄິ່ງສຳເລັດຮູບ ແລະ ຜະລິດຕະພັນສຳເລັດຮູບ;
3. ການຄິດໄລ່ອັດຕາການນຳໃຊ້ຢາງພາລາ ແລະ ການສູນເສຍໃນຂະບວນການຜະລິດປຸງແຕ່ງ.

**ມາດຕາ 58 ການຕິດຕາມ ສິນເຂົ້າ ແລະ ສິນອອກ ຢາງພາລາ**

ການຕິດຕາມ ສິນເຂົ້າ ແລະ ສິນອອກ ຢາງພາລາ ມີ ດັ່ງນີ້:

1. ເອກະສານຕິດຕາມ ສິນເຂົ້າ ຢາງພາລາ ປະກອບມີ:
   1) ລາຍການບັນຊີຢາງພາລາ;
   2) ສັນຍາ ຫຼື ບົດບັນທຶກການຊື້ ຂາຍ ຢາງພາລາ;
   3) ເອກະສານຢັ້ງຢືນການເສຍຄ່າພັນທະອາກອນຕ່າງໆ;
   4) ໃບຢັ້ງຢືນແຫຼ່ງທີ່ມາຂອງຢາງພາລາ;
   5) ໃບນຳສົ່ງຢາງພາລາ.
2. ເອກະສານຕິດຕາມ ສິນອອກ ຢາງພາລາ ປະກອບມີ:
   1) ລາຍການບັນຊີຢາງພາລາ ທີ່ນຳອອກຈາກໂຮງງານ ໂດຍແຍກເປັນແຕ່ລະປະເພດຜະລິດຕະພັນ;
   2) ລາຍການບັນຊີ ການສູນເສຍ ຫຼື ນຳໃຊ້ບໍ່ໄດ້ ຂອງຢາງພາລາ ພາຍໃນໂຮງງານ.
3. ເອກະສານຕິດຕາມ ຢາງພາລາ ທີ່ຕົກຄ້າງ ຢູ່ພາຍໃນໂຮງງານ ປະກອບມີ:
   1) ລາຍການບັນຊີຢາງພາລາ ທີ່ຍັງຄ້າງ ຢູ່ໂຮງງານ ໂດຍແຍກເປັນແຕ່ລະປະເພດຜະລິດຕະພັນ;
   2) ລາຍການບັນຊີຢາງພາລາ ທີ່ຜະລິດປຸງແຕ່ງແລ້ວ;
   3) ລາຍການບັນຊີຢາງພາລາ ທີ່ສູນເສຍ ຫຼື ນຳໃຊ້ບໍ່ໄດ້ ຢູ່ໃນໂຮງງານ.

**ມາດຕາ 59 ການລາຍງານ ສິນເຂົ້າ ແລະ ສິນອອກ ຢາງພາລາ**

ຜູ້ດຳເນີນກິດຈະການໂຮງງານປຸງແຕ່ງຢາງພາລາ ຕ້ອງສະຫຼຸບລາຍງານຂໍ້ມູນ ສິນເຂົ້າ, ສິນອອກ, ຄ້າງສາງ ຫຼື ໂຮງງານ ຂອງຢາງພາລາ ແລ້ວສົ່ງໃຫ້ຫ້ອງການກະສິກຳ ແລະ ສິ່ງແວດລ້ອມ ຂັ້ນເມືອງ ດັ່ງນີ້:

1. ໄຕມາດ 1: ໃຫ້ສົ່ງ ໃນລະຫວ່າງ ວັນທີ 31 ມີນາ ຫາ ວັນທີ 10 ເມສາ;
2. ໄຕມາດ 2: ໃຫ້ສົ່ງ ໃນລະຫວ່າງ ວັນທີ 30 ມິຖຸນາ ຫາ ວັນທີ 10 ກໍລະກົດ;
3. ໄຕມາດ 3: ໃຫ້ສົ່ງ ໃນລະຫວ່າງ ວັນທີ 30 ກັນຍາ ຫາ ວັນທີ 10 ຕຸລາ;
4. ໄຕມາດ 4: ໃຫ້ສົ່ງ ໃນລະຫວ່າງ ວັນທີ 31 ທັນວາ ຫາ ວັນທີ 10 ມັງກອນ ຂອງປີຖັດໄປ.

ໃນກໍລະນີ ບໍ່ສາມາດສົ່ງບົດລາຍງານຕາມກຳນົດເວລາ ຜູ້ດຳເນີນກິດຈະການໂຮງງານປຸງແຕ່ງຢາງພາລາ ຕ້ອງຊີ້ແຈງເຫດຜົນ ເປັນລາຍລັກອັກສອນໃຫ້ຫ້ອງການກະສິກຳ ແລະ ສິ່ງແວດລ້ອມ ຂັ້ນເມືອງ ເພື່ອຊາບ ແລະ ຫ້ອງການກະສິກຳ ແລະ ສິ່ງແວດລ້ອມ ຂັ້ນເມືອງ ຕ້ອງສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ລົງກວດກາຂໍ້ມູນຕົວຈິງ ແລະ ສ້າງບົດບັນທຶກຮັບຮູ້ ໂດຍກຳນົດວັນທີ ທີ່ຈະສົ່ງບົດລາຍງານຢ່າງຈະແຈ້ງ.

**ມາດຕາ 60 ການເກັບຮັກສາເອກະສານ**

ຜູ້ດຳເນີນກິດຈະການໂຮງງານປຸງແຕ່ງຢາງພາລາ ຕ້ອງເກັບຮັກສາເອກະສານ ກ່ຽວກັບສິນເຂົ້າ ແລະ ສິນອອກ ຢາງພາລາທັງໝົດ ຢ່າງເປັນລະບົບ ແລະ ສາມາດຊອກຫາໄດ້ງ່າຍ ເປັນຕົ້ນ ບົດບັນທຶກການຜະລິດປຸງແຕ່ງ, ຂໍ້ມູນການຜະລິດປຸງແຕ່ງ, ເອກະສານການຈຳໜ່າຍ ຊື້ ຂາຍ, ໃບຢັ້ງຢືນແຫຼ່ງທີ່ມາ ຫຼື ໃບອະນຸຍາດສົ່ງອອກ, ບົດລາຍງານ ແລະ ເອກະສານທີ່ກ່ຽວຂ້ອງອື່ນ.

ການເກັບຮັກສາເອກະສານ ຕ້ອງຮັບປະກັນຄວາມປອດໄພ ແລະ ຮັກສາໄວ້ຢ່າງໜ້ອຍ ສິບປີ ລວມທັງ ສະບັບຕົ້ນ ແລະ ສະບັບສຳເນົາ ແບບລະບົບທຳມະດາ ແລະ ແບບລະບົບເອເລັກໂຕຣນິກ.

# ໝວດທີ 8
# ສິດ ແລະ ພັນທະ ຂອງຜູ້ດຳເນີນທຸລະກິດກ່ຽວກັບຢາງພາລາ

**ມາດຕາ 61 ສິດ ຂອງຜູ້ດຳເນີນທຸລະກິດກ່ຽວກັບຢາງພາລາ**

ຜູ້ດຳເນີນທຸລະກິດກ່ຽວກັບຢາງພາລາ ມີ ສິດ ດັ່ງນີ້:

1. ສະເໜີ ແຜນການເກັບຊື້ ຂາຍ ຢາງພາລາ ຕາມລະບຽບການ;
2. ເປັນເຈົ້າກຳມະສິດທຸລະກິດ, ກິດຈະການ ແລະ ໄດ້ຮັບຜົນປະໂຫຍດຈາກການດຳເນີນທຸລະກິດ ແລະ ກິດຈະການໂຮງງານ ທີ່ຖືກຕ້ອງ;
3. ປຸກສ້າງ ແລະ ຕິດຕັ້ງເຄື່ອງຈັກ, ອຸປະກອນຕ່າງໆ ເພື່ອການດຳເນີນທຸລະກິດ ແລະ ກິດຈະການໂຮງງານ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;
4. ເຄື່ອນໄຫວດຳເນີນທຸລະກິດ ແລະ ກິດຈະການໂຮງງານ ຕາມຂອບເຂດສິດທີ່ໄດ້ຮັບອະນຸຍາດ;
5. ສະເໜີ ຂໍນະໂຍບາຍ, ການສົ່ງເສີມ, ຊ່ວຍເຫຼືອ, ແນະນຳ ຈາກພາກລັດ ແລະ ພາກສ່ວນອື່ນ ທາງດ້ານວິຊາການ ແລະ ເຕັກໂນໂລຊີ ກ່ຽວກັບການດຳເນີນທຸລະກິດ ແລະ ກິດຈະການໂຮງງານປຸງແຕ່ງຢາງພາລາ;
6. ໃຫ້ເຊົ່າ, ໂອນ, ມອບ, ສືບທອດ, ຊື້ ຂາຍ, ຂະຫຍາຍ ແລະ ຢຸດເຊົາ ການດຳເນີນທຸລະກິດ ແລະ ກິດຈະການໂຮງງານປຸງແຕ່ງຢາງພາລາ ຕາມກົດໝາຍ ແລະ ລະບຽບການ;
7. ໄດ້ຮັບການປົກປ້ອງສິດ ແລະ ຜົນປະໂຫຍດ ຕາມກົດໝາຍ;
8. ນຳໃຊ້ສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 62 ພັນທະ ຂອງຜູ້ດຳເນີນທຸລະກິດກ່ຽວກັບຢາງພາລາ**

ຜູ້ດຳເນີນທຸລະກິດກ່ຽວກັບຢາງພາລາ ມີ ພັນທະ ດັ່ງນີ້:

1. ສ້າງຕັ້ງ ດຳເນີນທຸລະກິດ ແລະ ກິດຈະການໂຮງງານ ຕາມບົດວິພາກເສດຖະກິດ-ເຕັກນິກ;
2. ເສຍ ພາສີ, ອາກອນ, ຄ່າທຳນຽມ ແລະ ຄ່າບໍລິການ ຕາມກົດໝາຍ ແລະ ລະບຽບການ;
3. ຜູ້ດຳເນີນທຸລະກິດ ແລະ ກິດຈະການໂຮງງານປຸງແຕ່ງຢາງພາລາ ຕ້ອງມີເນື້ອທີ່ດິນ ທີ່ເໝາະສົມ;
4. ປະຕິບັດຕາມກົດໝາຍ ແລະ ລະບຽບການ ກ່ຽວກັບການນຳໃຊ້ແຮງງານ ເປັນຕົ້ນ ຄ່າແຮງງານ, ສະຫວັດດີການສັງຄົມ ແລະ ອຸປະກອນປ້ອງກັນຄວາມປອດໄພ;
5. ສ້າງລະບົບການຄຸ້ມຄອງຄວາມປອດໄພພາຍໃນໂຮງງານ ໂດຍການສ້າງຕັ້ງໜ່ວຍງານຄຸ້ມຄອງຄວາມປອດໄພ, ສຸຂານາໄມ, ສິ່ງແວດລ້ອມ, ສານເຄມີ ແລະ ໄພພິບັດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;
6. ລາຍງານ ການເກີດອຸບປະຕິເຫດ ຂັ້ນຮ້າຍແຮງ ຢູ່ພາຍໃນໂຮງງານ ໃຫ້ຂະແໜງການກະສິກຳ ແລະ ສິ່ງແວດລ້ອມ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ ຢ່າງທັນການ;
7. ປະສານສົມທົບກັບ ອົງການປົກຄອງທ້ອງຖິ່ນ ບ່ອນທີ່ດຳເນີນທຸລະກິດ ແລະ ກິດຈະການໂຮງງານປຸງແຕ່ງຢາງພາລາ ຕັ້ງຢູ່ ເພື່ອຮັກສາຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍ;
8. ລາຍງານ ແລະ ສະໜອງຂໍ້ມູນ ກ່ຽວກັບການເຄື່ອນໄຫວດຳເນີນທຸລະກິດ ແລະ ກິດຈະການໂຮງງານປຸງແຕ່ງຢາງພາລາ ໃຫ້ການຈັດຕັ້ງລັດທີ່ກ່ຽວຂ້ອງ ເພື່ອຊາບ ເປັນແຕ່ລະໄລຍະ;
9. ແຈ້ງເຫດຜົນຂອງການຢຸດເຊົາຊົ່ວຄາວ, ຢຸດຖາວອນ ຫຼື ການລົ້ມລະລາຍ ໃຫ້ຂະແໜງການກະສິກຳ ແລະ ສິ່ງແວດລ້ອມ ເພື່ອຊາບ;
10. ກ່ອນຢຸດເຊົາດຳເນີນທຸລະກິດ ແລະ ກິດຈະການໂຮງງານ ຕ້ອງໄດ້ບຳບັດນ້ຳເປື້ອນ, ບຳບັດ ຫຼື ກຳຈັດສິ່ງເສດເຫຼືອ ທີ່ເປັນອັນຕະລາຍ ໃຫ້ຖືກຕ້ອງຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;
11. ໃຫ້ການຮ່ວມມືກັບເຈົ້າໜ້າທີ່ລັດ ໃນການຈັດຕັ້ງປະຕິບັດວຽກງານຕາມ ສິດ ແລະ ໜ້າທີ່ ຂອງເຈົ້າໜ້າທີ່ລັດ;
12. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍ ແລະ ລະບຽບການ.

# ໝວດທີ 9
# ອົງການຄຸ້ມຄອງວຽກງານທຸລະກິດກ່ຽວກັບຢາງພາລາ

**ມາດຕາ 63 ອົງການຄຸ້ມຄອງວຽກງານທຸລະກິດກ່ຽວກັບຢາງພາລາ**

ກົມປ່າໄມ້ ຮັບຜິດຊອບໂດຍກົງ ໃນການຄຸ້ມຄອງວຽກງານທຸລະກິດກ່ຽວກັບຢາງພາລາ ແລະ ເປັນເຈົ້າການໃນການປະສານສົມທົບກັບ ບັນດາກົມຂອງກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ.

ອົງການຄຸ້ມຄອງວຽກງານທຸລະກິດກ່ຽວກັບຢາງພາລາ ປະກອບດ້ວຍ:

1. ກົມປ່າໄມ້;
2. ພະແນກກະສິກຳ ແລະ ສິ່ງແວດລ້ອມ ຂັ້ນແຂວງ;
3. ຫ້ອງການກະສິກຳ ແລະ ສິ່ງແວດລ້ອມ ຂັ້ນເມືອງ.

**ມາດຕາ 64 ສິດ ແລະ ໜ້າທີ່ ຂອງກົມປ່າໄມ້**

ກົມປ່າໄມ້ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຜັນຂະຫຍາຍ, ເຜີຍແຜ່ ແລະ ແນະນຳ ຂໍ້ຕົກລົງສະບັບນີ້ ໃຫ້ພະແນກກະສິກຳ ແລະ ສິ່ງແວດລ້ອມ ຂັ້ນແຂວງ, ຫ້ອງການກະສິກຳ ແລະ ສິ່ງແວດລ້ອມ ຂັ້ນເມືອງ ແລະ ພາກສ່ວນທີ່ກ່ຽວຂ້ອງຕາມລະບຽບການ;
2. ຄົ້ນຄວ້າ ແລະ ສະເໜີ ລັດຖະມົນຕີ ກະຊວງກະສິກຳ ແລະ ສິ່ງແວດລ້ອມ ອອກຂໍ້ຕົກລົງ ສ້າງຕັ້ງ ແລະ ຍົກເລີກ ໃບຢັ້ງຢືນດຳເນີນກິດຈະການໂຮງງານປຸງແຕ່ງຢາງພາລາ ຂະໜາດໃຫຍ່;
3. ອອກ, ຕໍ່, ດັດແກ້, ໂຈະ, ຖອນ ແລະ ຍົກເລີກ ໃບຢັ້ງຢືນດຳເນີນກິດຈະການໂຮງງານປຸງແຕ່ງຢາງພາລາ ຂະໜາດໃຫຍ່;
4. ຈັດກອງປະຊຸມປຶກສາຫາລື ຮ່ວມກັບ ພາກລັດ, ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດ, ສະມາຄົມຢາງພາລາລາວ, ພາກທຸລະກິດ ແລະ ຄູ່ຮ່ວມພັດທະນາ ພາຍໃນ ແລະ ສາກົນ ກ່ຽວກັບວຽກງານທຸລະກິດກ່ຽວກັບຢາງພາລາ ແລະ ກິດຈະການໂຮງງານປຸງແຕ່ງຢາງພາລາ;
5. ສົມທົບກັບພະແນກກະສິກຳ ແລະ ສິ່ງແວດລ້ອມ ຂັ້ນແຂວງ ເພື່ອຄຸ້ມຄອງ, ຕິດຕາມ ແລະ ກວດກາ ການດຳເນີນທຸລະກິດ ແລະ ກິດຈະການໂຮງງານປຸງແຕ່ງຢາງພາລາ;
6. ສະຫຼຸບ ແລະ ລາຍງານ ວຽກງານທຸລະກິດກ່ຽວກັບຢາງພາລາ ແລະ ກິດຈະການໂຮງງານປຸງແຕ່ງຢາງພາລາ ໃຫ້ກະຊວງກະສິກຳ ແລະ ສິ່ງແວດລ້ອມ ເພື່ອຊາບ ເປັນແຕ່ລະໄລຍະ;
7. ນຳໃຊ້ ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍ ແລະ ລະບຽບການ.

**ມາດຕາ 65 ສິດ ແລະ ໜ້າທີ່ ຂອງພະແນກກະສິກຳ ແລະ ສິ່ງແວດລ້ອມ ຂັ້ນແຂວງ**

ພະແນກກະສິກຳ ແລະ ສິ່ງແວດລ້ອມ ຂັ້ນແຂວງ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ເຜີຍແຜ່ ແລະ ແນະນຳ ຂໍ້ຕົກລົງສະບັບນີ້ ໃຫ້ຫ້ອງການກະສິກຳ ແລະ ສິ່ງແວດລ້ອມ ຂັ້ນເມືອງ ແລະ ຜູ້ດຳເນີນທຸລະກິດ ແລະ ກິດຈະການໂຮງງານປຸງແຕ່ງຢາງພາລາ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ;
2. ຄົ້ນຄວ້າ ແລະ ນຳສະເໜີ ປະທານຄະນະກຳມະການປົກຄອງຂັ້ນແຂວງ ອອກຂໍ້ຕົກລົງ ສ້າງຕັ້ງ ແລະ ຍົກເລີກ ການດຳເນີນທຸລະກິດ ແລະ ກິດຈະການໂຮງງານປຸງແຕ່ງຢາງພາລາ ຂະໜາດນ້ອຍ ແລະ ຂະໜາດກາງ;
3. ອອກ, ຕໍ່, ດັດແກ້, ໂຈະ, ຖອນ ແລະ ຍົກເລີກ ດຳເນີນທຸລະກິດ ແລະ ກິດຈະການໂຮງງານປຸງແຕ່ງຢາງພາລາ ຂະໜາດນ້ອຍ ແລະ ຂະໜາດກາງ;
4. ຈັດກອງປະຊຸມປຶກສາຫາລື ຮ່ວມກັບ ພາກລັດ, ສະພາການຄ້າ ແລະ ອຸດສາຫະກຳ ຂັ້ນແຂວງ, ພາກທຸລະກິດ ແລະ ຄູ່ຮ່ວມພັດທະນາ ພາຍໃນ ແລະ ສາກົນ ກ່ຽວກັບວຽກງານທຸລະກິດກ່ຽວກັບຢາງພາລາ ແລະ ກິດຈະການໂຮງງານປຸງແຕ່ງຢາງພາລາ;
5. ຄຸ້ມຄອງ, ຕິດຕາມ ແລະ ກວດກາ ການດຳເນີນທຸລະກິດ ແລະ ກິດຈະການໂຮງງານປຸງແຕ່ງຢາງພາລາ ຢູ່ໃນຄວາມຮັບຜິດຊອບຂອງຕົນ;
6. ຢັ້ງຢືນແຜນການເຄື່ອນໄຫວ ປະຈຳງວດ ແລະ ປະຈຳປີ ຂອງໂຮງງານ ຕາມການແບ່ງຂັ້ນຄຸ້ມຄອງ;

7. ຄຸ້ມຄອງ ແລະ ຕິດຕາມ ສິນເຂົ້າ ແລະ ສິນອອກ ຢາງພາລາ ຢູ່ພາຍໃນໂຮງງານ ໃນຄວາມຮັບຜິດຊອບ ຕາມສິດ ແລະ ໜ້າທີ່ຂອງຕົນ;

8. ສະຫຼຸບ ແລະ ລາຍງານ ວຽກງານທຸລະກິດກ່ຽວກັບຢາງພາລາ ແລະ ກິດຈະການໂຮງງານປຸງແຕ່ງ ຢາງພາລາ ໃຫ້ຄະນະກຳມະການປົກຄອງຂັ້ນແຂວງ ແລະ ກະຊວງກະສິກຳ ແລະ ສິ່ງແວດລ້ອມ ເພື່ອຊາບ ເປັນແຕ່ ລະໄລຍະ;

9. ນຳໃຊ້ ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍ ແລະ ລະບຽບການ.

**ມາດຕາ 66 ສິດ ແລະ ໜ້າທີ່ ຂອງຫ້ອງການກະສິກຳ ແລະ ສິ່ງແວດລ້ອມ ຂັ້ນເມືອງ**

ຫ້ອງການກະສິກຳ ແລະ ສິ່ງແວດລ້ອມ ຂັ້ນເມືອງ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ເຜີຍແຜ່ ແລະ ແນະນຳ ຂໍ້ຕົກລົງສະບັບນີ້ ໃຫ້ເຈົ້າຂອງຜູ້ດຳເນີນທຸລະກິດ ແລະ ກິດຈະການໂຮງງານ ປຸງແຕ່ງຢາງພາລາ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ;

2. ຄຸ້ມຄອງ, ຕິດຕາມ ແລະ ກວດກາ ການດຳເນີນທຸລະກິດ ແລະ ກິດຈະການໂຮງງານປຸງແຕ່ງຢາງພາລາ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ;

3. ຄຸ້ມຄອງ ແລະ ຕິດຕາມ ສິນເຂົ້າ ແລະ ສິນອອກ ຢາງພາລາ ທີ່ຢູ່ໃນຄວາມຮັບຜິດຊອບ ຕາມສິດ ແລະ ໜ້າທີ່ຂອງຕົນ;

4. ສະຫຼຸບ ແລະ ລາຍງານ ວຽກງານທຸລະກິດກ່ຽວກັບຢາງພາລາ ແລະ ກິດຈະການໂຮງງານປຸງແຕ່ງ ຢາງພາລາ ໃຫ້ຄະນະກຳມະການປົກຄອງຂັ້ນເມືອງ ແລະ ພະແນກກະສິກຳ ແລະ ສິ່ງແວດລ້ອມ ຂັ້ນແຂວງ ເພື່ອ ຊາບ ເປັນແຕ່ລະໄລຍະ;

5. ນຳໃຊ້ ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍ ແລະ ລະບຽບການ.

## ໝວດທີ 10
## ບົດບັນຍັດສຸດທ້າຍ

**ມາດຕາ 67 ການຈັດຕັ້ງປະຕິບັດ**

ມອບໃຫ້ ກົມປ່າໄມ້, ພະແນກກະສິກຳ ແລະ ສິ່ງແວດລ້ອມ ຂັ້ນແຂວງ, ຫ້ອງການກະສິກຳ ແລະ ສິ່ງແວດລ້ອມ ຂັ້ນເມືອງ ເປັນເຈົ້າການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ທັງສູນກາງ ແລະ ທ້ອງຖິ່ນ ໂຄສະນາເຜີຍແຜ່, ແນະນຳ ແລະ ຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ ໃຫ້ໄດ້ຮັບຜົນດີ.

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 68 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນທີ 09 ຕຸລາ 2026 ເປັນຕົ້ນໄປ.

ຂໍ້ຕົກລົງສະບັບນີ້ ປ່ຽນແທນ ຂໍ້ຕົກລົງ ວ່າດ້ວຍ ການຄຸ້ມຄອງ, ພັດທະນາ ແລະ ປຸງແຕ່ງ ຢາງພາລາ ສະບັບເລກທີ 4288/ກປ, ລົງວັນທີ 17 ຕຸລາ 2023.

**ລັດຖະມົນຕີ**

ກະຊວງກະສິກຳ ແລະ ສິ່ງແວດລ້ອມ

ລັດຖະມົນຕີ

ປອ. ລິນຄຳ ດວງສະຫວັນ

**ບຢສກ 1**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ນະຄອນຫຼວງວຽງຈັນ/ແຂວງ............................
ພະແນກກະສິກຳ ແລະ ສິ່ງແວດລ້ອມ
ຂະແໜງປ່າໄມ້

ເລກທີ ............/ປມຂ
......................., ວັນທີ ....................

# ໃບຢັ້ງຢືນ

## ສວນກ້າເບ້ຍໄມ້ ແລະ ເພາະຊຳ ຢາງພາລາ

- ອີງຕາມ ກົດໝາຍ ວ່າດ້ວຍປ່າໄມ້ ສະບັບເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019;
- ອີງຕາມ ຂໍ້ຕົກລົງ ວ່າດ້ວຍທຸລະກິດກ່ຽວກັບຢາງພາລາ ສະບັບເລກທີ............./ກສ, ລົງວັນທີ........;
- ອີງຕາມ ບົດບັນທຶກການກວດກາສະຖານທີ່ຕັ້ງຂອງສວນກ້າເບ້ຍໄມ້, ຄັ້ງວັນທີ..............................

**ຂະແໜງປ່າໄມ້ ນະຄອນຫຼວງວຽງຈັນ/ແຂວງ..................... ຢັ້ງຢືນ ໃຫ້:**

ທ່ານ:.........................................................., ອາຍຸ:...........ປີ, ສັນຊາດ:..............................
ໃບນາມ: ................................., ປະຈຸບັນຢູ່ບ້ານ:.................................., ຕາແສງ:..............................,
ເມືອງ/ນະຄອນ:......................., ນະຄອນຫຼວງວຽງຈັນ/ແຂວງ:...................., ໂທລະສັບ............................
ສ້າງສວນກ້າເບ້ຍໄມ້ ແລະ ເພາະຊຳ ຢາງພາລາ ໃນເນື້ອທີ່ດິນ ຈຳນວນ.................................................ຕາແມັດ,
ຕັ້ງຢູ່ບ້ານ...................................., ຕາແສງ:............................., ເມືອງ/ນະຄອນ:.................................,
ນະຄອນຫຼວງວຽງ ຈັນ/ແຂວງ.................................. ເພື່ອຜະລິດແນວພັນຢາງພາລາ ຈຳໜ່າຍ ພາຍໃນ ແລະ ສົ່ງອອກຕ່າງປະເທດ. ຜູ້ໄດ້ຮັບໃບຢັ້ງຢືນສະບັບນີ້ ຕ້ອງປະຕິບັດເງື່ອນໄຂ ດັ່ງນີ້:

1. ດຳເນີນທຸລະກິດ ກ່ຽວກັບ ການຜະລິດ ແນວພັນ ແລະ ເບ້ຍຢາງພາລາເທົ່ານັ້ນ ຫ້າມ ຊື້ ຂາຍ ຫຼື ມອບໂອນໃຫ້ຄົນອື່ນເຊົ່າ ຢ່າງເດັດຂາດ;
2. ທຶນທີ່ນຳໃຊ້ເຂົ້າໃນການຜະລິດແນວພັນ ແລະ ເບ້ຍຢາງພາລາ ມີມູນຄ່າທັງໝົດ.......................ກີບ;
3. ຜູ້ດຳເນີນທຸລະກິດດັ່ງກ່າວ ຕ້ອງປະຕິບັດຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ຢ່າງເຂັ້ມງວດ;
4. ໃບຢັ້ງຢືນສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ນຳໃຊ້ໄດ້ ເຖິງວັນທີ...........

***<u>ໝາຍເຫດ:</u>***

- *ໃບຢັ້ງຢືນສະບັບນີ້ ມີອາຍຸນຳໃຊ້ໄດ້ 01 ປີ ຖ້າຫາກໝົດກຳນົດ ຕ້ອງມາຕໍ່ພາຍໃນ 01 ເດືອນ ຂອງປີຖັດໄປ;*
- *ທຸກຄັ້ງ ກ່ອນຈະເຄື່ອນຍ້າຍແນວພັນ ຫຼື ເບ້ຍຢາງພາລາ ເຂົ້າມາຜະລິດ ຫຼື ນຳອອກ ເພື່ອຈຳໜ່າຍ ພາຍໃນ ແລະ ສົ່ງອອກຕ່າງປະເທດ ຕ້ອງແຈ້ງເອກະສານທີ່ກ່ຽວຂ້ອງ ຕໍ່ຂະແໜງປ່າໄມ້ ເພື່ອຮັບຊາບ.*

ດັ່ງນັ້ນ, ຈຶ່ງອອກໃບຢັ້ງຢືນສະບັບນີ້ ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດ.

